ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-07 ກຸມພາ 2025
ປີທີ 14
ສະບັບທີ 1004
ລາຍສັປະດາ

## ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ຢ້ຽມຢາມ ສປປລາວ ຢ່າງເປັນທາງການ



(ສພຊ) - ໃນຕອນເຊົ້າຂອງວັນທີ 06 ກຸມພາ 2025, ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ປະທານສະພາສູງ ແຫ່ງ ຣາຊະອານາຈັກກຳປູເຈຍ ແລະ ຄະນະຜູ້ແທນຂັ້ນສູງກຳປູເຈຍ ໄດ້ເດີນທາງມາເຖິງສະໜາມບິນສາກົນວັດໄຕ, ນະຄອນຫຼວງວຽງຈັນ ເພື່ອຢ້ຽມຢາມ ສປປລາວ ຢ່າງເປັນທາງການ ໃນລະຫວ່າງວັນທີ 06-07 ກຸມພາ 2025, ຕາມຄຳເຊື້ອເຊີນຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການ

ອ່ານຕໍ່ໜ້າ 12

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນມັງກອນ 2025



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນມັງກອນ 2025 ໄດ້ດຳເນີນຂຶ້ນໃນວັນທີ 3-4 ກຸມພາ 2025 ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານຮອງປະທານກຳມາທິການສະພາແຫ່ງຊາດ, ບັນດາ

ອ່ານຕໍ່ໜ້າ 7

## ຮອງປະທານ ສພຊ ເຄື່ອນໄຫວວຽກງານຢູ່ແຂວງຫົວພັນ



(ສພຂ)-ວັນທີ 24-30 ມັງກອນຜ່ານມາ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະໄດ້ເຄື່ອນໄຫວວຽກງານ, ພົບປະປະຊາຊົນ ແລະ ເຂົ້າຮ່ວມພິທີເປີດຂົວອູ່ຢູ່ບ້ານສິບຮາວ-ບ້ານໂພນໄຊ ແລະ ງານບຸນປະເພນີປີໃໝ່ຂອງຊົນເຜົ່າໄຕດຳ, ໄຕແດງ ຢູ່ແຂວງຫົວພັນ.

ໃນການເຄື່ອນໄຫວວຽກງານ, ໄດ້ເປີດກອງປະຊຸມຮ່ວມກັບສະພາປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບ (ປກສ) ແຂວງ ພ້ອມທັງເປີດກອງປະຊຸມຮ່ວມກັບທ່ານເຈົ້າເມືອງ, ກອງບັນຊາການ ປກສ

ອ່ານຕໍ່ໜ້າ 8

## ຄສຊ ເຂດ 12 ປະຊຸມປະຈຳປີ 2024




(ສພຂ) - ກອງປະຊຸມປະຈຳປີ 2024 ຂອງຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ໄດ້ຈັດຂຶ້ນເມື່ອວັນທີ 28 ມັງກອນຜ່ານມາ ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12; ເຂົ້າຮ່ວມມີທ່ານຄຳໃບດຳລັດຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12, ທ່ານ ວັນໄຊ ພອງສະຫວັນ ເຈົ້າແຂວງໆຄຳມ່ວນ, ບັນດາທ່ານຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ແລະ ບັນດາພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ຮັບຟັງບົດລາຍງານປະຈຳປີ 2024, ທິດທາງແຜນການປະຈຳປີ 2025 ແລະ ແຜນການເຄື່ອນໄຫວວຽກ

ອ່ານຕໍ່ໜ້າ 7

## ໜ່ວຍກຳມະບານຮາກຖານ ກຜງສ ຈັດກອງປະຊຸມໃຫຍ່ຄັ້ງທີ II



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍກຳມະບານຮາກຖານກຳມາທິການແຜນການ, ການເງິນແລະການກວດສອບ (ກຜງສ) ໄດ້ດຳເນີນໃນຕອນບ່າຍວັນພະຫັດທີ 30 ມັງກອນຜ່ານມາ ໂດຍການເປັນປະທານຂອງສະຫາຍ ໂພສີ ເຕັມເມລາດ ຮອງປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ (ສພຊ), ປະທານໜ່ວຍກຳມະບານຮາກຖານ ກຜງສ, ມີສະຫາຍ ປອ. ລີເບີ ລີບົວປາວ ກຳມະການສູນກາງພັກ, ຄະນະບໍລິຫານງານພັກ, ເລຂາໜ່ວຍພັກຮາກຖານກຳມາທິການແຜນການ, ການເງິນ ແລະ ການກວດສອບພ້ອມດ້ວຍບັນດາສະຫາຍຕາງໜ້າຈາກໜ່ວຍກຳມະບານຮາກຖານພາຍໃນ ສພຊ ລວມຜູ້ເຂົ້າຮ່ວມທັງໝົດ 27 ສະຫາຍ ເປັນຍິງ 10 ສະຫາຍ.

ອ່ານຕໍ່ໜ້າ 8

## ສຳເລັດກອງປະຊຸມໃຫຍ່ກຳມະບານຮາກຖານ ຄລສ



ອ່ານຕໍ່ໜ້າ 7



ໜີບໍ່ພົ້ນກຳ (ໜ້າ 6)




ສິງກະໂປ... (ໜ້າ 9)




ກັບໄວ້ລ່ວງໜ້າ... (ໜ້າ 11)

# ກອງປະຊຸມໃຫຍ່ຄັ້ງທີ II ໜ່ວຍກຳມະບານຮາກຖານ ກມຍທ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍກຳມະບານຮາກຖານກຳມາທິການຍຸຕິທຳ (ກມຍທ) ໄດ້ດຳເນີນໃນຕອນເຊົ້າວັນພຸດທີ 29 ມັງກອນຜ່ານມາ ໂດຍການເປັນປະທານຂອງສະຫາຍ ນາງ ຄອນສະຫວັນ ທຳມະວົງ ປະທານກຳມະບານຮາກຖານ ກມຍທ; ມີສະຫາຍ ນາງ ທຸມມາລີ ວົງພະຈັນ ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ (ສພຊ), ເລຂາໜ່ວຍພັກຮາກຖານກຳມາທິການຍຸຕິທຳ, ສະຫາຍ ໂພສີ ເຕັມເມລາດ ຮອງປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ, ບັນດາສະຫາຍຕາງໜ້າຈາກໜ່ວຍກຳມະບານຮາກຖານພາຍໃນ ສພຊ ລວມຜູ້ເຂົ້າຮ່ວມທັງໝົດ 31 ສະຫາຍ ເປັນຍິງ 11 ສະຫາຍ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງ ເຊິ່ງໄດ້ຕີລາຄາສະພາບການເຄື່ອນໄຫວວຽກງານຂອງກຳມະບານຮາກຖານກຳມາທິການຍຸຕິທຳ ໃນໄລຍະ 5 ປີຜ່ານມາ (2020-2024), ໃນນັ້ນ ໄດ້ຍົກໃຫ້ເຫັນຜົນງານດ້ານດີຫຼາຍດ້ານທີ່ສາມາດຍາດມາໄດ້ ລວມທັງບາງຂໍ້ຄົງຄ້າງ ແລະສາເຫດທີ່ຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງກຳມະບານຮາກຖານ ກມຍທ ສາມາດຈັດຕັ້ງປະຕິບັດໄດ້ດີຂຶ້ນໃນຕໍ່ໜ້າ; ເຫັນດີເປັນເອກະພາບກັບທິດທາງແຜນການເຄື່ອນໄຫວວຽກງານໃນໄລຍະ 5 ປີຕໍ່ໜ້າ (2025-2029) ໃນນັ້ນ, ບັນຫາສຳຄັນຕົ້ນຕໍແມ່ນການເພີ່ມທະວີການສຶກສາອົບຮົມແນວຄິດ, ການຊ່ວຍເຫຼືອ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງສະມາຊິກກຳມະບານພາຍໃນຮາກຖານ ຕິດພັນກັບການເປັນເສນາທິການທີ່ດີໃຫ້ແກ່ໜ່ວຍພັກຮາກຖານກຳມາທິການຍຸຕິທຳ ໄປພ້ອມກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ແລະ ແຜນການທີ່ວາງໄວ້ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ; ຮັບຮອງເອົາບົດສຳຫຼວດການນຳພາ-ຊີ້ນຳຂອງຄະນະກຳມະບານຮາກຖານຕະຫຼອດໄລຍະ 5 ປີຜ່ານມາ ເຊິ່ງຍົກໃຫ້ເຫັນດ້ານດີ ຜົນງານ, ດ້ານອ່ອນ ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຈຳນວນໜຶ່ງ ທີ່ຄະນະກຳມະບານຮາກຖານຊຸດໃໝ່ຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ ແລະ ຈັດຕັ້ງປະຕິບັດຕາມແຜນການທີ່ກຳນົດໄວ້ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງກຳມະບານຮາກຖານມີຄວາມຖືກຕ້ອງ ແລະສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ ກໍຄືຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງກຳມະບານຮາກຖານກຳມາທິການຍຸຕິທຳ ໃຫ້ປາກົດຜົນເປັນຈິງ.

ຜູ້ແທນກອງປະຊຸມ 26 ສະຫາຍ, ຍິງ 11 ສະຫາຍ ໄດ້ພ້ອມກັນໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະກຳມະບານຮາກຖານກຳມາທິການຍຸຕິທຳຊຸດໃໝ່ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕແລະຖືກຕ້ອງສອດຄ່ອງກັບມາດຕະຖານແລະເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ອອກສະໝັກຮັບເລືອກຕັ້ງ 7 ສະຫາຍ ຍິງ 2 ສະຫາຍ, ເລືອກເອົາ 5 ສະຫາຍ ຍິງ 2 ສະຫາຍ ຄື: ສະຫາຍ ນາງ ຄອນສະຫວັນ ທຳມະວົງ ເປັນປະທານ, ສະຫາຍ ພູພະຍາ ມະຫາລາດ ເປັນຮອງປະທານ, ສະຫາຍ ບຸນຄື ພົນທະວົງສີ ເປັນປະທານກວດກາ, ສະຫາຍ ແສງຈັນ ເຜີງພົມມາ ແລະ ສະຫາຍ ນາງ ລັດສະນີ ວົງສາລີ ເປັນຄະນະ.

ສະຫາຍ ນາງ ທຸມມາລີ ວົງພະຈັນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດໃນການເຄື່ອນໄຫວແລະຈັດຕັ້ງປະຕິບັດວຽກງານຂອງກຳມະບານຮາກຖານກຳມາທິການຍຸຕິທຳ ທີ່ສາມາດຍາດມາໄດ້ໃນໄລຍະ 5 ປີຜ່ານມາທັງເນັ້ນໜັກໃຫ້ເອົາໃຈໃສ່ບາງບັນຫາ ເປັນຕົ້ນ: ເພີ່ມທະວີຄວາມເປັນເຈົ້າການ, ຄວາມເປັນແບບຢ່າງນຳໜ້າ ໃນການປົກປ້ອງສິດ ແລະຜົນປະໂຫຍດຂອງສະມາຊິກກຳມະບານພາຍໃນຮາກຖານ; ສືບຕໍ່ປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າຂອງກຳມະບານດ້ວຍຄວາມຮັບຜິດຊອບສູງ ໃຫ້ມີຜົນສຳເລັດຕາມຄາດໝາຍ ເພື່ອຮັກສາມູນເຊື້ອຄວາມເປັນເຈົ້າຕົນເອງ; ເຕົ້າໂຮມຄວາມສາມັກຄີຊ່ວຍເຫຼືອເບິ່ງແຍງເຊິ່ງກັນແລະກັນ ແລະ ປະຕິບັດລະບຽບວິໄນໃຫ້ເຂັ້ມງວດ.

**(ສອນສັກ ວັນວິໄຊ)**

# ຕິດຕາມກວດກາການປະຕິບັດຄາດໝາຍພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ ນວ

(ສປນວ) - ວັນທີ 28 ມັງກອນຜ່ານມາ, ທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າພ້ອມດ້ວຍທ່ານ ນາງ ເກດມະນີ ບັນດາສັກ ປະທານຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າ, ສະພາປະຊາຊົນນະຄອນຫຼວງວຽງຈັນ, ບັນດາທ່ານສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນປະຈຳເຂດເລືອກຕັ້ງເມືອງ, ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ (ນວ) ໄດ້ເຄື່ອນໄຫວຕິດຕາມກວດກາ ແລະເກັບກຳຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດຄາດໝາຍວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕາມມະຕິສະພາແຫ່ງຊາດສະບັບເລກທີ 134/ສພຊ, ລົງວັນທີ 01 ກໍລະກົດ 2024 ຢູ່ເມືອງສັງທອງ ໂດຍໄດ້ເປີດກອງປະຊຸມເພື່ອເຮັດວຽກຮ່ວມກັບທ່ານສັ່ງວອນ ພົມມະສອນ ຮອງເຈົ້າເມືອງ, ການນຳຂອງເມືອງ, ຫ້ອງການອ້ອມຂ້າງເມືອງ, ອົງການປົກຄອງບ້ານ ແລະ ວິຊາການທີ່ກ່ຽວຂ້ອງ.



ກອງປະຊຸມໄດ້ຮັບຟັງການສະຫຼຸບລາຍງານໂດຍຫຍໍ້ຈາກພະແນກກະສິກຳ ແລະ ປ່າໄມ້ ນວ, ຮອງເຈົ້າເມືອງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງສັງທອງ ກ່ຽວກັບຜົນງານ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງຂອງຄາດໝາຍການສ້າງບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດຂອງບ້ານໃຫຍ່ນາຈະເລີນ, ການຂະຫຍາຍກອງທຶນພັດທະນາຂັ້ນບ້ານ ແລະການນຳໃຊ້ຊົນລະປະທານເຂົ້າໃນການເພີ່ມພູນການຜະລິດຂອງປະຊາຊົນ; ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນຖອດຖອນໄດ້ ແລະທິດທາງແກ້ໄຂຕໍ່ຂອດການປະສານງານລະຫວ່າງສູນກາງ ກັບ ທ້ອງຖິ່ນ ຕໍ່ວຽກງານດັ່ງກ່າວ. ຈາກນັ້ນ, ກໍພ້ອມກັນປະກອບຄຳຄິດຄຳເຫັນຕໍ່ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ຕອນບ່າຍຂອງວັນດຽວກັນ, ຄະນະຍັງໄດ້ລົງພົບປະອົງການປົກຄອງ ແລະ ປະຊາຊົນບ້ານໄຮ່ເໜືອ ເພື່ອເກັບກຳຂໍ້ມູນກ່ຽວກັບວຽກງານກອງທຶນພັດທະນາຂັ້ນບ້ານ, ພ້ອມທັງລົງຕິດຕາມພື້ນທີ່ຕົວຈິງ ເພື່ອເກັບກຳຂໍ້ມູນກ່ຽວກັບສະພາບການກໍ່ສ້າງອ່າງເກັບນ້ຳຫ້ວຍເຕັນບ້ານນາສາວນາງແລະຄວາມສາມາດໃນການສະໜອງນ້ຳໃຫ້ແກ່ການຜະລິດກະສິກຳຂອງປະຊາຊົນ.

**(ນາງ ຂັນເງິນ ອຳພອນພົງ)**

# ຄະນະຜູ້ແທນລາວ ເຂົ້າຮ່ວມກອງປະຊຸມສາກົນ ເພື່ອຄວາມສົມດຸນຂອງໂລກ



(ສພຊ) ລະຫວ່າງວັນທີ 28-31 ມັງກອນ 2025 ຄະນະຜູ້ແທນສະພາແຫ່ງຊາດລາວນຳໂດຍທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ໄດ້ເຂົ້າຮ່ວມກອງປະຊຸມສາກົນເພື່ອຄວາມສົມດຸນຂອງໂລກຄັ້ງທີ6 (The 6th International Conference for World Balance) ທີ່ນະຄອນຫຼວງລາຮາວານ, ສາທາ ລະນະລັດກູບາ ໂດຍມີຄະນະຜູ້ແທນ 1,233 ທ່ານ ຈາກ 98 ປະເທດ ທີ່ມາຈາກຫຼາກຫຼາຍຂະແໜງການເຂົ້າຮ່ວມ; ກອງປະຊຸມດັ່ງກ່າວ, ຍັງເປັນການລະນຶກເຖິງວັນຄົບຮອບ 130 ປີ ແຫ່ງການເສຍຊີວິດທີ່ສະໜາມຮົບຂອງທ່ານ ໂຮເຊ ມາກຕີ ວິລະຊົນແຫ່ງຊາດ, ຜູ້ເປັນຈິດວິນຍານຫຼັກແຫຼ່ງແຫ່ງເອກະລາດຂອງກູບາ ທັງເປັນນັກປັດຊະຍາຜູ້ຍິ່ງໃຫຍ່ທີ່ມີຜົນງານດ້ານມະນຸດສະທຳ, ເປັນແຮງບັນດານໃຈໃຫ້ເກີດຄວາມພະຍາຍາມທີ່ຈະນຳມາເຊິ່ງການພັດທະນາທີ່ຍືນຍົງ ແລະ ຄວາມຍຸຕິທຳທາງສັງຄົມ.

ໃນໄລຍະດຳເນີນກອງປະຊຸມຄັ້ງນີ້, ນອກຈາກກອງປະຊຸມເວທີປຶກສາຫາລືຂອງສະມາຊິກລັດຖະສະພາ, ຍັງມີກອງປະຊຸມປຶກສາຫາລືວຽກງານອື່ນໆ ເຊັ່ນ: ຊາວໜຸ່ມ, ການອະນຸລັກສິ່ງແວດລ້ອມ, ການສື່ສານມວນຊົນ, ການນຳໃຊ້ປັນຍາປະດິດ, ການຕໍ່ສູ້ເພື່ອສັນຕິພາບແລະອື່ນໆ.

ກອງປະຊຸມເວທີປຶກສາຫາລືຂອງສະມາຊິກລັດຖະສະພາ, ບັນດາຜູ້ແທນຈາກປະເທດຕ່າງໆໄດ້ຂຶ້ນກ່າວປາໄສພາຍໃຕ້ຫົວຂໍ້ຂອງກອງປະຊຸມເຊິ່ງໄດ້ຍົກໃຫ້ເຫັນເຖິງສິ່ງທ້າທາຍຕ່າງໆທີ່ກຳລັງເກີດຂຶ້ນໃນໂລກ, ການຊອກຫາວິທີທາງທີ່ມີປະສິດທິພາບໃນການເຮັດວຽກຮ່ວມກັນໂດຍອີງໃສ່ຄວາມສາມັກຄີ ແລະ ການຮ່ວມມືສາກົນ ເພື່ອແກ້ໄຂສິ່ງທ້າທາຍທີ່ຮີບດ່ວນທີ່ສຸດໃນປັດຈຸບັນ; ເຄົາລົບຕໍ່ຫຼັກການຂອງກົດໝາຍສາກົນ ແລະ ກົດບັດຂອງສະຫະປະຊາຊາດ; ຊຸກຍູ້, ປົກປັກຮັກສາ ແລະ ເສີມຂະຫຍາຍລັດທິຫຼາຍຝ່າຍ; ຄວາມຈຳເປັນໃນການສ້າງລະບຽບໂລກໃໝ່ທີ່ຍຸຕິທຳແລະເທົ່າທຽມກັນ; ຄວາມສຳຄັນໃນການສົ່ງເສີມ ແລະປົກປ້ອງສັນຕິພາບ ແລະຄວາມໝັ້ນຄົງ ລວມເຖິງການແກ້ໄຂຂໍ້ຂັດແຍ້ງດ້ວຍສັນຕິວິທີ.

ໃນພິທີເປີດກອງປະຊຸມ, ທ່ານ ຈັນທະວົງ ແສນອາມາດມົນຕີ ຫົວໜ້າຄະນະຜູ້ແທນລາວ ໄດ້ກ່າວປາໄສ ໂດຍຍົກໃຫ້ເຫັນເຖິງສະພາບການຂອງໂລກໃນປັດຈຸບັນ ທີ່ກຳລັງປະເຊີນໜ້າກັບສິ່ງທ້າທາຍຕ່າງໆ ເຊິ່ງເປັນໄພຂົ່ມຂູ່ຢ່າງໜັກໜ່ວງຕໍ່ການປົກປັກຮັກສາສັນຕິພາບ, ສະຖຽນລະພາບ ແລະຄວາມໝັ້ນຄົງໃນພາກພື້ນກໍຄືໃນໂລກ; ສປປລາວດຳເນີນນະໂຍບາຍ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ, ສະໜັບສະໜູນການແກ້ໄຂບັນດາຂໍ້ຂັດແຍ້ງໃນໂລກດ້ວຍສັນຕິວິທີ. ໃນຕອນທ້າຍ, ທ່ານໄດ້ຮຽກຮ້ອງໃຫ້ບັນດາສະມາຊິກລັດຖະສະພາເສີມຂະຫຍາຍເພີ່ມທະວີບົດບາດດ້ານນິຕິບັນຍັດ, ປັບປຸງກົດໝາຍ, ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ, ຮັບປະກັນຄວາມສະເໝີພາບຍິງ-ຊາຍ, ສົ່ງເສີມການໃຫ້ມີການເຂົ້າຮ່ວມຂອງຕົວແທນຊົນເຜົ່າ ແລະ ສາສະໜາ ໃນຂົງເຂດການເມືອງ, ເສດຖະກິດ-ສັງຄົມ, ວັດທະນະທຳ, ສາທາລະນະສຸກ ແລະ ການສຶກສາ.

ໃນກອງປະຊຸມເວທີປຶກສາຫາລືສະມາຊິກລັດຖະສະພາ, ທ່ານ ຈັນທະວົງ ແສນອາມາດມົນຕີ ໄດ້ມີຄຳເຫັນກ່າວສະແດງຄວາມເຫັນອົກເຫັນໃຈຕໍ່ ສ.ກູບາ ທີ່ຖືກປິດລ້ອມຂວ້ຳບາດທາງດ້ານເສດຖະກິດມາໄດ້ຫຼາຍທົດສະວັດ ແລະ ປະນາມຕໍ່ການຖືກກ່າວຫາເປັນປະເທດທີ່ສະໜັບສະໜູນການກໍ່ການຮ້າຍແຕ່ຝ່າຍດຽວຂອງສະຫະລັດອາເມລິກາ ເຊິ່ງຂັດກັບກົດໝາຍສາກົນ. ພ້ອມກັນນັ້ນ, ກໍສືບຕໍ່ສະໜັບສະໜູນຂໍ້ຮຽກຮ້ອງຂອງວົງຄະນາຍາດສາກົນ ໃຫ້ຍົກເລີກການຂວ້ຳບາດຕໍ່ ສ.ກູບາ ພ້ອມທັງລຶບລາຍຊື່ປະເທດກູບາ ອອກຈາກບັນຊີ "ປະເທດທີ່ສະໜັບສະໜູນການກໍ່ການຮ້າຍ"ຂອງ ສ.ອາເມລິກາ ແລະ ຍົກເລີກບັນດາມາດຕະການບີບບັງຄັບຝ່າຍດຽວທັງໝົດຕໍ່ບັນດາປະເທດເອກະລາດ.

ໂອກາດເຂົ້າຮ່ວມກອງປະຊຸມຄັ້ງນີ້, ຄະນະຜູ້ແທນລາວຍັງໄດ້ເຂົ້າຢ້ຽມຂ່ຳນັບທ່ານປະທານສະພາແຫ່ງຊາດອຳນາດປະຊາຊົນ ແຫ່ງ ສ.ກູບາ, ພົບປະສອງຝ່າຍກັບທ່ານຮອງປະທານກຳມາທິການການຕ່າງປະເທດ, ເຄື່ອນໄຫວຢູ່ແຂວງອາກເຕມີຊາ ໂດຍໄດ້ເຂົ້າຢ້ຽມຂ່ຳນັບທ່ານເຈົ້າແຂວງ ແລະ ຢ້ຽມຊົມອະນຸສາວະລີວິລະຊົນຂອງແຂວງດັ່ງກ່າວ, ຢ້ຽມຢາມໂຮງຮຽນມິດຕະພາບກູບາ-ລາວ ສີທົນ ກົມມະດຳ ແລະ ຢ້ຽມຢາມພື້ນຖານວັດທະນະທຳປະຫວັດສາດຈຳນວນໜຶ່ງ; ນອກຈາກນັ້ນ, ຍັງໄດ້ຢ້ຽມຢາມອະນຸສອນສະຖານ ໂຮເຊ ມາກຕີ ວິລະຊົນແຫ່ງຊາດກູບາ.

**(ກົມພົວພັນລັດຖະສະພາຫຼາຍຝ່າຍ)**

# ເຝິກອົບຮົມການຕິດຕາມກວດກາປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ

(ສພຊ) - ກອງປະຊຸມເຝິກອົບຮົມການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ເຊິ່ງມີທ່ານຮອງປະທານກຳມາທິການກົດໝາຍ; ທ່ານຮອງປະທານ,ເລຂາທິການ ແລະ ປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ; ຫົວໜ້າກົມ,ຄະນະພະແນກແລະລັດຖະກອນຈາກກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ; ຕາງໜ້າຈາກຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຂອງ ສພຂ 9 ແຂວງ ຄື: ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ, ຊຽງຂວາງແລະວຽງຈັນພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ 56 ທ່ານ, ຍິງ 10 ທ່ານ.



ກອງປະຊຸມໄດ້ຮັບຟັງການສະເໜີບົດຮຽນກ່ຽວກັບການສ້າງນິຕິກຳ; ບາງບົດຮຽນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງຄຳມ່ວນ; ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;ບົດຮຽນການຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ. ຈາກນັ້ນ, ກໍໄດ້ດຳເນີນການທົດລອງການນຳໃຊ້ຄູ່ມື ທັງຈັດຕັ້ງປະຕິບັດຕົວຈິງ ໂດຍຈັດແບ່ງເປັນກຸ່ມເພື່ອຄົ້ນຄວ້າ ແລະ ແລກປ່ຽນບົດຮຽນຕົວຈິງຂອງແຕ່ລະແຂວງ ສົມທົບໃສ່ຄູ່ມື ເປັນຕົ້ນການສ້າງແຜນການ, ຄຳເຈາະຈີ້ມ, ຄຳແນະນຳ ແລະ ບົດລາຍງານກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ຕອນທ້າຍ ໄດ້ສະຫຼຸບຕີລາຄາຜົນການເຝິກອົບຮົມຄັ້ງນີ້ເຊິ່ງໄດ້ເນັ້ນໃຫ້ເອົາໃຈໃສ່ບາງຈຸດ ເປັນຕົ້ນຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນ ຫຼວງ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ກອງປະຊຸມທີ່ຈັດຂຶ້ນເມື່ອວັນທີ 29 ມັງກອນ - 1 ກຸມພາ 2025 ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ຮັບການສະໜັບສະໜູນຈາກມູນນິທິເວດມິນສເທີ ເພື່ອປະຊາທິປະໄຕ (Westminster Foundation for Democracy - WFD).



# ເຍົາວະຊົນໂຮງຮຽນ ຫຼວງປະເສີດ ທັດສະນະສຶກສາຢູ່ ສພຊ



(ສພຊ) - ເພື່ອປູກຈິດສຳນຶກໃຫ້ເຍົາວະຊົນທັນວາ ໄດ້ຮູ້ເຖິງມູນເຊື້ອ, ປະຫວັດ ແລະ ຜົນງານການເຄື່ອນໄຫວຂອງທ່ານຜູ້ນຳທີ່ແສນເຄົາລົບຮັກ, ຮຽນຮູ້ແບບຢ່າງທີ່ດີເພື່ອກາຍເປັນຜູ້ສືບທອດຂອງພັກຂອງຊາດໃນອະນາຄົດ ທັງເປັນການສ້າງໃຫ້ນັກຮຽນໄດ້ຮັບຮູ້ ແລະ ມີຄວາມເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ (ສພຊ); ຕອນບ່າຍວັນສຸກທີ 7 ກຸມພາ 2025 ຄະນະອຳນວຍການໂຮງຮຽນຫຼວງປະເສີດ ໄດ້ນຳພາເຍົາວະຊົນຈຳນວນ 30 ນ້ອງ ມາທັດສະນະສຶກສາຢູ່ ສພຊ ໂດຍກົມສື່ມວນຊົນຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໃຫ້ການຕ້ອນຮັບ ແລະ ນຳພາຄະນະຢ້ຽມຊົມຫ້ອງປະຊຸມໃຫຍ່ ແລະ ຫ້ອງມູນເຊື້ອສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

# ກບຜ ແລກປ່ຽນບົດຮຽນກັບອົງການຈັດຕັ້ງມະຫາຊົນ



(ສພຊ) - ລະຫວ່າງວັນທີ 28-30 ມັງກອນຜ່ານມາ, ທ່ານ ແກ້ວຈະເລີນ ເຊຍຢົ້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ (ກບຜ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະ 3 ອົງການຈັດຕັ້ງມະຫາຊົນ ໂດຍການຕ້ອນຮັບຂອງທ່ານ ນາງ ອາລີຍາວັນ ອັກຄະວົງ ຮອງປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ, ທ່ານ ທອງລີ ສີສຸລິດ ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ທ່ານ ນາງ ຈັນໂສດາພອນທິບຮອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ.

ທັງນີ້, ກໍເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ການຜັນຂະຫຍາຍກົດໝາຍເປັນນິຕິກຳໃຕ້ກົດໝາຍຂອງອົງການຈັດຕັ້ງມະຫາຊົນ, ປຶກສາຫາລືການແກ້ໄຂບັນດາປາກົດການຫຍໍ້ທໍ້ທາງສັງຄົມທີ່ຕິດພັນກັບພາລະບົດບາດຂອງແຕ່ລະອົງການ ທັງເປັນການແລກປ່ຽນການປະສານສົມທົບ ແລະ ກົນໄກການປະສານງານລະຫວ່າງກຳມາທິການບັນດາເຜົ່າ ກໍຄືສະພາແຫ່ງຊາດ ກັບອົງການຈັດຕັ້ງມະຫາຊົນ.

ການເຄື່ອນໄຫວພົບປະ 3 ອົງການຈັດຕັ້ງມະຫາຊົນ ໃນຄັ້ງນີ້ໄດ້ແລກປ່ຽນບົດຮຽນກ່ຽວກັບການປະຕິບັດພາລະບົດບາດໃນການເປັນຕົວແທນຂອງກຳມະກອນໃນໂຮງຈັກໂຮງງານ ແລະ ການຄຸ້ມຄອງແຮງງານ, ການມີສ່ວນຮ່ວມຂອງຊາວໜຸ່ມ ໃນການແກ້ໄຂບັນຫາຢາເສບຕິດ ແລະ ການແຕ່ງດອງທີ່ແອບແຝງຕິດພັນກັບການຄ້າມະນຸດ.

**(ນາງ ອາລິນ ສຸພົມມະປະຕິດ)**

# ເຝິກອົບຮົມເຕັກນິກການບໍລິຫານ-ນຳພາອົງກອນ ແລະ ຮ່າງເອກະສານ

(ສພຊ) - ວັນທີ 29-31 ມັງກອນ 2025 ທີ່ທ່າລາດ ແຂວງວຽງຈັນ, ໄດ້ມີກອງປະຊຸມເຝິກອົບຮົມເຕັກນິກການບໍລິຫານ-ນຳພາອົງກອນແລະການຮ່າງເອກະສານ ໃຫ້ພະນັກງານສະພາປະຊາຊົນຂັ້ນແຂວງ(ສພຂ) ໂດຍການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດເຊິ່ງມີວິທະຍາກອນຮັບເຊີນຈາກຄະນະເລຂາທິການສະພາແຫ່ງຊາດ, ຫ້ອງວ່າການສູນກາງພັກ ແລະ ມະຫາວິທະຍາໄລແຫ່ງຊາດ, ສຳມະນາກອນທີ່ມາຈາກ ສພຂ ທັງ 18 ແຂວງ ພ້ອມດ້ວຍຄະນະຮັບຜິດຊອບ ແລະກອງເລຂາກອງປະຊຸມເຂົ້າຮ່ວມ 50 ກວ່າທ່ານ.

ທ່ານ ສິນທະລາ ຫຼ້າສຸກສະໄໝ ໄດ້ກ່າວເປີດກອງປະຊຸມວ່າ: ການເຝິກອົບຮົມຄັ້ງນີ້ ເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ສຳມະນາກອນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ມີປະສິດທິຜົນ ແນໃສ່ເຮັດໃຫ້ພະນັກງານ-ລັດຖະກອນທີ່ເປັນເສນາທິການ ມີຄວາມຊຳນານງານ-ຊ່ຽວຊານ ແລະເປັນມືອາຊີບ. ຕະຫຼອດໄລຍະການເຄື່ອນໄຫວໜ້າທີ່ວຽກງານຕົວຈິງ, ເຊື່ອໄດ້ວ່າສຳມະນາກອນກໍລ້ວນແຕ່ມີບົດຮຽນ, ປະສົບປະການ ບໍ່ວ່າຈະເປັນການເຂົ້າຮ່ວມເຝິກອົບຮົມ, ຍົກລະດັບໃນແຕ່ລະຂັ້ນຕ່າງໆ; ແຕ່ການເຂົ້າຮ່ວມຍົກລະດັບຄວາມຮັບຮູ້ ກໍຄືການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນສະພາປະຊາຊົນຂັ້ນແຂວງໃນຄັ້ງນີ້ ຖືວ່າເປັນການຮຽນຮູ້ເອົາບົດຮຽນ, ຫຼັກການອັນໃໝ່ໆ ຈາກວິທະຍາກອນຜູ້ທີ່ມີບົດຮຽນ, ປະສົບການໃນການສິດສອນກໍຄືການລົງເລິກວຽກງານອັນສະເພາະຢ່າງຫຼາກຫຼາຍພໍສົມຄວນ ແລະ ຈະເປັນໂອກາດດີທີ່ຈະໄດ້ແລກປ່ຽນຄວາມເຫັນ, ຖອດຖອນບົດຮຽນ ແລະປະສົບການເຊິ່ງກັນແລະກັນ, ທັງນີ້ ກໍເພື່ອຖ່າຍທອດໃຫ້ແກ່ພະນັກງານເສນາທິການ ກໍຄືພະນັກງານຜູ້ສືບທອດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນຂັ້ນແຂວງໃນປັດຈຸບັນ ແລະ ຕໍ່ໜ້າ.



ບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີເຕັກນິກການບໍລິຫານ ແລະນຳພາອົງກອນ, ການຮ່າງບົດຄຳເຫັນ ແລະ ບົດໂອ້ລົມຂອງການນຳ, ການສ້າງຮ່າງມະຕິກອງປະຊຸມ ແລະ ການສັງລວມຄຳເຫັນຂອງປະທານຢູ່ໃນກອງປະຊຸມ; ຈາກນັ້ນ, ສຳມະນາກອນໄດ້ຄົ້ນຄວ້າ, ແລກປ່ຽນປະກອບຄວາມຄິດເຫັນຢ່າງກົງໄປກົງມາ ແລະ ເຝິກແອບເຮັດບົດເຝິກຫັດຕົວຈິງ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິເອເຊຍ (The Asia Foundation - TAF) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ກຸກກິກ ບຸດດາໄຊ)**

# ສສນວ ເມືອງສີສັດຕະນາກ ປະຊຸມປະຈຳປີ 2024



(ສປນວ) - ວັນທີ 30 ມັງກອນຜ່ານມາ ໄດ້ມີກອງປະຊຸມປະຈຳປີ 2024 ຂອງຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ປະຈຳເຂດເລືອກຕັ້ງເມືອງສີສັດຕະນາກ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ລຳພອຍ ສີອັກຄະຈັນ ກຳມະການປະຈຳພັກ, ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ທັງເປັນ ສສນວ ປະຈຳເຂດເລືອກຕັ້ງເມືອງສີສັດຕະນາກ ແລະ ທ່ານ ພອນສິນ ສາວະລີ ຮອງເລຂາພັກເມືອງ, ຫົວໜ້າຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງສີສັດຕະນາກ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳ ສປນວ, ສສນວ ປະຈຳເຂດເລືອກຕັ້ງເມືອງສີສັດຕະນາກ ພ້ອມດ້ວຍຄະນະພັກ, ຫົວໜ້າຫ້ອງການອ້ອມຂ້າງ, ໄອຍະການປະຊາຊົນ ແລະສານປະຊາຊົນເຂດ3ແລະນາຍບ້ານພາຍໃນເມືອງດັ່ງກ່າວ.

ກອງປະຊຸມໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ປະຈຳປີ 2024 ແລະທິດທາງແຜນການປີ 2025 ຂອງເມືອງ ຈາກທ່ານ ປອ. ທິນນະກອນ ທອງຄຳ ຮອງເຈົ້າເມືອງໆສີສັດຕະນາກ; ລາຍງານແລະຊີ້ແຈງຕໍ່ຄຳສະເໜີຂອງປະຊາຊົນ ກ່ຽວກັບການກໍ່ສ້າງ-ສ້ອມແປງເສັ້ນທາງ, ໄຟເຍືອງທາງ ແລະ ບັນຫາຂີ້ເຫຍື້ອພາຍໃນເມືອງ ຈາກບັນດາຫ້ອງການທີ່ກ່ຽວຂ້ອງ; ພ້ອມທັງຮັບຟັງການສະຫຼຸບລາຍງານການເຄື່ອນໄຫວວຽກງານປະຈຳປີ 2024 ແລະທິດທາງແຜນການປີ2025 ຂອງຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງ ຈາກທ່ານ ນາງ ຄຳແຫວນ ສິງບັນດິດ ຮອງຫົວໜ້າຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງສີສັດຕະນາກ.

**(ນາງ ຈັນທະລີ ວົງໄຊ)**



# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ຢູ່ເມືອງຊ່ອນ



(ສພຊ)-ວັນທີ29-30 ມັງກອນຜ່ານມາ, ທ່ານ ສີຄຳ ບຸນມີໄຊ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ຢູ່ 2 ບ້ານ ຂອງເມືອງຊ່ອນ ຄື: ທົ່ງປໍແລະນຳງ້າວ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 119 ຄົນ, ຍິງ 56 ຄົນ.

ທ່ານ ສີຄຳ ບຸນມີໄຊ ໄດ້ນຳເອົາເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ເຜີຍແຜ່ໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈເນື້ອໃນ ແລະ ບັນດາມະຕິຕ່າງໆທີ່ສະພາແຫ່ງຊາດ ໄດ້ພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມດັ່ງກ່າວ ພ້ອມທັງຮັບເອົາຄຳຄິດເຫັນ, ຄຳສະເໜີຕ່າງໆຈາກພໍ່ແມ່ປະຊາຊົນ ນຳໄປປຶກສາຫາລືນຳພາກສ່ວນກ່ຽວຂ້ອງ ເພື່ອພ້ອມກັນຊອກຫາວິທີແກ້ໄຂ ແລະ ຊອກທາງອອກ.

ໃນການເຄື່ອນໄຫວຄັ້ງນີ້, ທ່ານຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມ ແລະເຂົ້າສານ ລວມມູນຄ່າ 2 ລ້ານກີບ ມອບໃຫ້ຄອບຄົວທຸກຍາກພ້ອມທັງເຂົ້າຮ່ວມງານສະເຫຼີມສະຫຼອງບຸນປີໃໝ່ (ບຸນເກີຣ) ຢູ່ບ້ານສາມ ອີກດ້ວຍ.

**(ນາງ ພັດສະພາ ສຸວັນທອນ)**

# ກອງປະຊຸມຄົບຄະນະ 3 ຄະນະກຳມະການ ສພຂ ວຽງຈັນ




(ສພຂ)-ທ້າຍເດືອນມັງກອນຜ່ານມາທີ່ສະໂມສອນໃຫຍ່ຫ້ອງວ່າການແຂວງວຽງຈັນ, ໄດ້ມີກອງປະຊຸມຄົບຄະນະ3ຄະນະກຳມະການຂອງສະພາປະຊາຊົນ (ສພຂ)ວຽງຈັນປະຈຳປີ2024 ໂດຍການເປັນປະທານຮ່ວມຂອງທ່ານ ລຳໄມ ກູດລາວົງ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະການເງິນ, ທ່ານ ພັທ. ບຸນນຳ ຈັນທອງສີ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ທ່ານ ນາງ ຈັນທະຄອນ ສີອຳພອນ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ມີບັນດາທ່ານຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງທີ່ສັງກັດໃນແຕ່ລະຄະນະກຳມະການ, ຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ອົງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ຜູ້ແທນກອງປະຊຸມໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ2025 ຂອງ 3 ຄະນະກຳມະການ ແລະ ການຊີ້ແຈງບັນຫາທີ່ພົ້ນເດັ່ນຂອງພະແນກການທີ່ກ່ຽວຂ້ອງ ເຊິ່ງຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້; ຈາກນັ້ນ, ໄດ້ປະກອບຄຳຄິດເຫັນເພື່ອເຮັດໃຫ້ເນື້ອໃນກອງປະຊຸມມີຄວາມຄົບຖ້ວນ, ສົມບູນແລະຖືກຕ້ອງສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍກຳນົດໄວ້, ຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານໄດ້ຮັບຜົນສຳເລັດ ແລະ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງເທື່ອລະກ້າວ.

ທ່ານ ລຳໄມ ກູດລາວົງ ໄດ້ຕີລາຄາສູງຕໍ່ການຈັດຕັ້ງປະຕິບັດວຽກງານຂອງ3ຄະນະກຳມະການ ທັງສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້ ແລະ ເນັ້ນໜັກໃຫ້ 3 ຄະນະກຳມະການ ຈົ່ງເພີ່ມທະວີການພົວພັນປະສານງານໃຫ້ກົມກຽວກັນລະຫວ່າງຄະນະກຳມະການດ້ວຍກັນ, ຄະນະກຳມະການກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ເມືອງໃນການແລກປ່ຽນສະໜອງຂໍ້ມູນເຊິ່ງກັນແລະກັນ.

**(ນາງ ບຸລາຕີ ແສນທະວົງ)**

# ສພຂ ຊຽງຂວາງ ສຳເລັດ ກອງປະຊຸມສະໄໝສາມັນເທື່ອທີ 8



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ຊຸດທີ II ໄດ້ປິດລົງດ້ວຍຜົນສຳເລັດ ພາຍຫຼັງດຳເນີນມາເປັນເວລາ 3 ວັນ ແຕ່ວັນທີ 29-31 ມັງກອນ 2025 ໂດຍການເປັນປະທານຂອງ ທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ບຸນຈັນ ສີວົງພັນ ເຈົ້າແຂວງໆຊຽງຂວາງ, ບັນດາຫົວໜ້າພະແນກການ ແລະ ອົງການ, ເຈົ້າເມືອງ-ຮອງເຈົ້າເມືອງອ້ອມຂ້າງແຂວງ ແລະ ອະດີດການນຳຂອງແຂວງ.

ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ພ້ອມກັນປະກອບຄຳຄິດຄຳເຫັນ ແລະ ມີຄຳຖາມເຈາະຈີ້ມຕໍ່ແຕ່ລະຂົງເຂດທີ່ໄດ້ລາຍງານຕໍ່ກອງປະຊຸມ ແລະ ຮັບຟັງການຊີ້ແຈ້ງຂອງພາກສ່ວນຕ່າງໆ. ຫຼັງຈາກນັ້ນ, ກໍໄດ້ລົງມະຕິຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນການລົງທຶນຂອງແຂວງ ປະຈຳປີ 2024ແລະແຜນການປີ2025, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ແລະ ທິດທາງແຜນການປີ 2025; ບົດລາຍງານຂອງອົງການກວດສອບປະຈຳພາກເໜືອ1 ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະທິດທາງແຜນການປີ2025, ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023; ບົດລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງອົງການກວດລັດແຂວງ; ບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2024 ແລະທິດທາງແຜນການປີ2025 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ;ບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງສະພາປະຊາຊົນແຂວງຊຽງຂວາງ ຊຸດທີ II.

ທ່ານ ບຸນໂຮມ ເທດທານີ ໄດ້ຮຽກຮ້ອງພະແນກການ ແລະ ອົງການທີ່ກ່ຽວຂ້ອງ ຈົ່ງເຜີຍແຜ່ມະຕິຂອງກອງປະຊຸມຄັ້ງນີ້ ໃຫ້ພະນັກງານ-ລັດຖະກອນໄດ້ຮັບຮູ້ ເພື່ອຮັບປະກັນການເຄື່ອນໄຫວຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ. ພ້ອມກັນນັ້ນ, ກໍຮຽກຮ້ອງ ສສຊ, ສສຂ ຈົ່ງເອົາໃຈໃສ່ປະຕິບັດວຽກງານ ແລະ ມີຄວາມຮັບຜິດສອບສູງຕໍ່ໜ້າທີ່ການເມືອງຂອງຕົນຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ; ເອົາໃຈໃສ່ລົງຕິດຕາມກວດກາ ແລະ ຊຸກຍູ້ບັນດາຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງຜັນຂະຫຍາຍບັນດາກົດໝາຍ ແລະ ມະຕິຄຳສັ່ງຕ່າງໆ; ເອົາໃຈໃສ່ພິຈາລະນາ, ຄົ້ນຄວ້າ ແລະ ແກ້ໄຂບັນດາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ ເຮັດໃຫ້ມີຄວາມເຊື່ອໝັ້ນຈາກອົງການຈັດຕັ້ງແຕ່ລະຂັ້ນ, ຈາກຜູ້ມີສິດເລືອກຕັ້ງ ນັບມື້ນັບກວ້າງຂວາງ.

# ມອບລົດຖີບໃຫ້ນັກຮຽນເມືອງພິນ ແລະ ເມືອງພະລານໄຊ



(ສພຂ) - ວັນທີ 4 ກຸມພາຜ່ານມາ, ທ່ານ ກິງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງສະຫວັນນະເຂດ ແລະ ຕາງໜ້າພະແນກສຶກສາທິການ ແລະ ກິລາແຂວງ ພ້ອມດ້ວຍຄະນະ ໄດ້ເດີນ ທາງໄປມອບລົດຖີບທີ່ໄດ້ຮັບການຊ່ວຍເຫຼືອຈາກມູນນິທິຈີນເພື່ອພັດທະນາຊົນນະບົດ ຈຳນວນ 23 ຄັນ ໃນນີ້ 1 ຄັນ ແມ່ນຂອງສະພາປະຊາຊົນແຂວງ ໃຫ້ນ້ອງນັກຮຽນຜູ້ທີ່ທຸກຍາກຂາດເຂີນຢູ່ໂຮງຮຽນເປົ້າໝາຍຂອງເມືອງພິນ ແລະ ເມືອງພະລານໄຊ; ທ່ານ ກິງແກ້ວ ມີວໍລະຈັກ ຍັງໄດ້ເຂົ້າຮ່ວມພິທີເປີດນຳໃຊ້ຂົວເບຕົງເສີມເຫຼັກຂ້າມຫ້ວຍລະຮັງ ບ້ານນາຮັງນ້ອຍ ເມືອງອາດສະພອນພ້ອມທັງມອບເງິນຊຸກຍູ້ຈຳນວນ 10 ລ້ານກີບ.

# ສສຊ-ສສຂ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ຢູ່ຕະໂອ້ຍ ແລະ ສະໝ້ອຍ



(ສພຊ) - ວັນທີ 23-24 ມັງກອນຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ສາລະວັນ ນຳໂດຍທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານຄະນະສສຊປະຈຳເຂດເລືອກຕັ້ງທີ14, ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ທັງເປັນ ສສຊປະຈຳເຂດເລືອກຕັ້ງທີ14 ໄດ້ລົງເຄື່ອນໄຫວເຜີຍ ແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີ II ຢູ່ 4 ຈຸດຄື: ບ້ານສ້ອຍທົ່ງ, ເມືອງຕະໂອ້ຍ, ກອງລ້ຽງສັດໃຫຍ່ ເລກ 4, ເທສະບານເມືອງສະໝ້ອຍ ແລະ ບ້ານອາຕຸ ເຊິ່ງມີພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ພ້ອມດ້ວຍພໍ່ແມ່ປະຊາຊົນຢູ່ 4 ຈຸດດັ່ງກ່າວ ເຂົ້າຮ່ວມ 300 ກວ່າທ່ານ, ຍິງ 170 ທ່ານ.

ບັນດາທ່ານສະມາຊິກສະພາ ໄດ້ຍົກໃຫ້ເຫັນເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂ ສາລະວັນ ຊຸດທີ II ທີ່ໄດ້ຮັບຟັງການລາຍງານ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງຊາດແລະຂອງທ້ອງຖິ່ນ. ການເຄື່ອນໄຫວຄັ້ງນີ້ ຍັງໄດ້ຮັບຟັງການລາຍງານຈາກອົງການປົກຄອງເມືອງ-ບ້ານ ກ່ຽວກັບຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານໃນດ້ານຕ່າງໆ ໂດຍສະເພາະວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແຜນພັດທະນາເສດຖະກິດ-ສັງຄົມ; ພ້ອມກັນນັ້ນ, ຍັງໄດ້ຮັບຟັງຄຳສະເໜີ, ຄຳຄິດຄຳເຫັນ, ຄວາມຂັດຂ້ອງໝອງໃຈຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າເຊິ່ງຄຳສະເໜີສ່ວນໃຫຍ່ແມ່ນຕິດພັນກັບການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ, ການພັດທະນາເສດຖະກິດ-ສັງຄົມ, ນະໂຍບາຍຕໍ່ຜູ້ທີ່ມີຜົນງານຄວາມດີໃນໄລຍະຕໍ່ສູ້ປົດປ່ອຍຊາດ, ພື້ນຖານໂຄງລ່າງ, ເສັ້ນທາງໄປມາບໍ່ສະດວກ. ຄຳສະເໜີສ່ວນຫຼາຍ ໄດ້ຮັບການອະທິບາຍ ແລະ ຊີ້ແຈ້ງກັບທີ່; ສ່ວນບາງຄຳສະເໜີທີ່ຕິດພັນກັບຫຼາຍຂະແໜງການ, ກອງເລຂາໄດ້ສັງລວມເພື່ອນຳໄປລາຍງານຕໍ່ຄະນະປະຈຳສະພາປະຊາຊົນແຂວງ ເພື່ອຄົ້ນຄວ້າພິຈາລະນາ ແລະ ຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂ.

ໂອກາດນີ້, ບັນດາທ່ານ ສສຊ ແລະ ສສຊ ໄດ້ມີຄຳເຫັນໂອ້ລົມ ໂດຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ອົງການປົກຄອງເມືອງ, ບ້ານ ແລະ ພໍ່ແມ່ປະຊາຊົນ ທີ່ເອົາໃຈໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະວຽກງານອື່ນໆໄດ້ຮັບຜົນສຳເລັດຕາມແຜນການ.

ການເຄື່ອນໄຫວແຕ່ລະຈຸດ, ຍັງໄດ້ນຳເອົາເຄື່ອງອຸປະໂພກ-ບໍລິໂພກ, ເຄື່ອງນຸ່ງຫົ່ມກັນໜາວ, ກະຕ່າຂອງຂວັນແລະອຸປະກອນກິລາ: ບານສົ່ງ, ບານຕີ, ກະຕໍ້, ໜ່າງບານຕີ, ໜ່າງກະຕໍ້ ລວມມູນຄ່າ 25 ລ້ານກວ່າກີບ ມອບໃຫ້ແກ່ສອງເມືອງດັ່ງກ່າວ.

**(ແສງວັນ ແກ້ວບົວທອງ)**

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ຢູ່ເມືອງພະລານໄຊ



(ສພຂ) - ວັນທີ 3-4 ກຸມພາຜ່ານມາ, ທ່ານສະແຫວງ ນັນທະວົງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ13ແຂວງສະຫວັນນະເຂດ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ພ້ອມດ້ວຍບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງພະລານໄຊ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດຊຸດທີII ຢູ່ກຸ່ມບ້ານໂນນມີໄຊ, ສະໂມ ສອນເມືອງ ແລະ ກຸ່ມບ້ານນາລາຍ ເມືອງພະລານໄຊ ໂດຍການຕ້ອນຮັບ ແລະ ຮ່ວມເຄື່ອນໄຫວຂອງທ່ານ ດວງຈັນ ແສງບຸດຕະລາດ ເລຂາຄະນະບໍລິຫານພັກເມືອງ, ເຈົ້າເມືອງໆພະລານໄຊ ເຊິ່ງບັນດາທ່ານຄະນະປະຈຳພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ກຳລັງ ປກຊ-ປກສ, ພະນັກງານ-ລັດຖະກອນ, ອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ໃຫ້ການຕ້ອນຮັບຢ່າງອົບອຸ່ນ.

ພາຍຫຼັງຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານການນຳພາ-ຊີ້ນຳຂອງອຳນາດການປົກຄອງທັງ 3 ຈຸດ, ບັນດາທ່ານ ສສຊ, ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະສພຂ ສະຫວັນນະເຂດ ຊຸດທີ II ໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈ ທັງເປັນການລົງພົບປະເພື່ອເກັບກຳຄຳຄິດຄຳເຫັນຕໍ່ວຽກງານການຄຸ້ມຄອງບໍລິຫານລັດ; ພ້ອມກັນນັ້ນ, ຍັງໄດ້ເປີດໂອກາດໃຫ້ການນຳຂອງເມືອງ, ການຈັດຕັ້ງຂັ້ນບ້ານ ກໍຄືປະຊາຊົນແຕ່ລະກຸ່ມບ້ານ ໄດ້ຊັກຖາມ ແລະມີຄຳສະເໜີແລກປ່ຽນໂດຍເພາະແມ່ນການພັດທະນາພື້ນຖານໂຄງລ່າງ, ການສ້ອມແປງເສັ້ນທາງ ແລະ ຂົວ. ຈາກນັ້ນ, ບັນດາທ່ານສະມາ ຊິກສະພາ ກໍໄດ້ຕອບຕາມການຊັກຖາມຂອງພໍ່ແມ່ປະຊາຊົນ ເພື່ອໃຫ້ຮັບຮູ້ ແລະເຂົ້າໃຈເຖິງບັນຫາຕ່າງໆຕໍ່ກັບສະພາບການອັນລວມໃນການພັດທະນາຂອງປະເທດເຮົາໃນປັດຈຸບັນ ພ້ອມທັງຮັບເອົາຄຳສະເໜີຂອງອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ໄປສະເໜີຕໍ່ຂະແໜງການກ່ຽວຂ້ອງ ເພື່ອນຳໄປປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂໃນຂັ້ນຕໍ່ໄປ; ນອກນີ້, ຍັງໄດ້ມີຄຳເຫັນຫຼາຍດ້ານຕໍ່ກັບການພັດທະນາພື້ນຖານໂຄງລ່າງ, ການພັດທະນາເສດຖະກິດ, ການແກ້ໄຂບັນຫາຢາເສບຕິດ ພ້ອມທັງຮຽກຮ້ອງໃຫ້ທຸກພາກສ່ວນເປັນເຈົ້າການຈັດຕັ້ງປະຕິບັດຕໍ່ວຽກງານດັ່ງກ່າວ ໃຫ້ປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ໂອກາດດັ່ງກ່າວ, ສສຊ ແລະ ສສຂ ຍັງໄດ້ມອບເກືອ ຈຳນວນ 20 ກະສອບ ໃຫ້ກຸ່ມບ້ານນາລາຍ ເພື່ອນຳ ໄປແຈກຢາຍໃຫ້ແກ່ປະຊາຊົນ ແລະ ລົງຕິດຕາມສະພາບຕົວຈິງຂອງສຸກສາລາກຸ່ມບ້ານດັ່ງກ່າວ ທີ່ສະເໜີໃຫ້ສ້ອມ ແປງຫຼັງຄາທີ່ຮົ່ວ ເພື່ອສະເໜີໃຫ້ພາກສ່ວນກ່ຽວຂ້ອງຮີບຮ້ອນແກ້ໄຂ.

**(ນາງ ຄອນສະຫວັນ ເມກສະຫວັນ)**

# ພົບປະແລກປ່ຽນວຽກງານສະພາປະຊາຊົນ 4 ແຂວງພາກໃຕ້




(ສພຂ) - ວັນທີ 1 ກຸມພານີ້ ທີ່ສະໂມສອນແຂວງຈຳປາສັກ ໄດ້ມີກອງປະຊຸມພົບປະແລກປ່ຽນບົດຮຽນວຽກງານສະພາປະຊາຊົນ ຂອງ 4 ແຂວງ (ຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື) ໂດຍການເປັນປະທານຮ່ວມຂອງທ່ານ ສາຍທອງ ໄຊຍະວົງ ປະທານສະພາປະຊາຊົນແຂວງຈຳປາສັກ, ທ່ານ ສີເຮັງ ທອມສົມບັດ ປະທານສະພາປະຊາຊົນແຂວງສາລະວັນ, ທ່ານ ດົງເພັດ ພະຍົນ ປະທານສະພາປະຊາຊົນແຂວງເຊກອງ ແລະ ທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື; ເຂົ້າຮ່ວມມີບັນດາທ່ານຮອງປະທານສະພາປະຊາຊົນແຂວງ(ສພຂ), ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນຂອງ ສພຂ 4 ແຂວງພາກໃຕ້.

ທ່ານສາຍທອງ ໄຊຍະວົງ ໄດ້ກ່າວວ່າ: ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອເສີມຂະຫຍາຍການຮ່ວມມື ທັງນຳເອົາບົດຮຽນ, ປະສົບການຕົວຈິງໃນການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນແຂວງ ມາແລກປ່ຽນບົດຮຽນເຊິ່ງກັນແລະກັນ ໂດຍຊອກໃຫ້ເຫັນດ້ານດີ, ດ້ານຄົງຄ້າງ ເພື່ອພ້ອມກັນຊອກຫາວິທີແກ້ໄຂໃນການຈັດຕັ້ງປະຕິບັດຕົວຈິງ ເພື່ອເປັນຂໍ້ມູນອັນສຳຄັນນຳໄປຄົ້ນຄວ້າປັບປຸງແລະພັດທະນາວຽກງານໃຫ້ເໝາະສົມ

ອ່ານຕໍ່ໜ້າ 11

# ກອງປະຊຸມສະໄໝສາມັນເທື່ອທີ 8 ສພຂ ອັດຕະປື



(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງອັດຕະປື (ສພຂ) ຊຸດທີ II ອັດລົງດ້ວຍຜົນສຳເລັດ ໃນວັນທີ 25 ມັງກອນ 2025 ພາຍຫຼັງດຳເນີນມາເປັນເວລາ 3 ວັນ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື; ມີທ່ານ ພທ. ວັນທອງ ກອງມະນີ ເຈົ້າແຂວງອັດຕະປື, ບັນດາການນຳພັກ-ລັດຂັ້ນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ (ສສຂ), ບັນດາພະແນກການ ແລະ ອົງການຈັດຕັ້ງພັກ-ລັດຂັ້ນແຂວງ, ແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ 100 ກວ່າທ່ານ.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2024 ແລະ ທິດທາງແຜນການປີ 2025 ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ, ແຜນການລົງທຶນຂອງລັດປະຈຳປີ 2025, ແຜນງົບປະມານແຫ່ງລັດປະຈຳປີ 2024 ແລະທິດທາງແຜນການປີ 2025; ບົດລາຍງານຂອງອົງການກວດສອບພາກໃຕ້ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະທິດທາງແຜນການປະຈຳປີ 2025, ວຽກງານກວດກາລັດແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະທິດທາງແຜນການປີ 2025, ບົດລາຍງານຜົນການກວດກາຕາມຜົນການກວດສອບຮອດປີ 2022 ແລະ ວຽກງານສໍ້ລາດບັງຫຼວງ; ບົດລາຍງານຂອງອົງການໄອຍະການ ແລະ ສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ທິດທາງແຜນການປີ 2025; ບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ທິດທາງແຜນການປີ 2025.

ກອງປະຊຸມໄດ້ຮັບຟັງການຊີ້ແຈງເພີ່ມຕື່ມຕາມຄຳຊັກຖາມຂອງບັນດາທ່ານ ສສຂ ກ່ຽວກັບບັນຫາທີ່ພົ້ນເດັ່ນຈາກພະແນກການທີ່ກ່ຽວຂ້ອງເປັນຕົ້ນແມ່ນ: ໂຍທາທິການ ແລະ ຂົນສົ່ງ, ກະສິກຳ ແລະ ປ່າໄມ້, ສຶກສາທິການ ແລະກິລາ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພາຍໃນ; ນອກນັ້ນ, ຍັງໄດ້ຮັບຟັງມະຕິຂອງຄະນະປະຈຳສະພາປະຊາຊົນແຂວງກ່ຽວກັບການຍົກຍ້າຍແລະແຕ່ງຕັ້ງ, ປົດຕຳແໜ່ງ ພະນັກງານນຳພາ-ຄຸ້ມຄອງຂອງແຂວງ ຕາມການສະເໜີຂອງທ່ານເຈົ້າແຂວງ.

**(ວິມັດ ສີສຸລາດ)**

# ມອບລົດຖີບໃຫ້ໂຮງຮຽນສາມັນກິນນອນຊົນເຜົ່າແຂວງ



(ສພຂ) - ວັນທີ 5 ກຸມພາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ມີພິທີມອບ-ຮັບລົດຖີບຈາກໂຄງການ "ນ້ຳໃຈຮັກຊາດລາວ" ຈຳນວນ 15 ຄັນ ມູນຄ່າ 20 ລ້ານກວ່າກີບ ໃຫ້ໂຮງຮຽນສາມັນກິນນອນຊົນເຜົ່າແຂວງອັດຕະປື, ຕາງໜ້າກ່າວມອບໂດຍທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ແລະ ຕາງໜ້າກ່າວຮັບໂດຍທ່ານ ໄມແສງ ດວງສີ ວ່າການອຳນວຍການໂຮງຮຽນສາມັນກິນນອນຊົນເຜົ່າແຂວງ ເຊິ່ງມີຄະນະນຳຈາກ ສພຂ, ຄູ-ອາຈານ ແລະ ນັກຮຽນຈຳນວນໜຶ່ງເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ໄມແສງ ດວງສີ ໄດ້ສະແດງຄວາມຂອບໃຈຢ່າງຍິ່ງມາຍັງສະພາປະຊາຊົນແຂວງ ກໍຄືສະພາແຫ່ງຊາດ ແລະ ຜູ້ໃຫ້ການຊ່ວຍເຫຼືອສະໜັບສະໜູນໃນຄັ້ງນີ້ ທັງໃຫ້ຄຳໝັ້ນສັນຍາວ່າ ຈະນຳເອົາລົດຖີບຈຳນວນດັ່ງກ່າວ ນຳໃຊ້ໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ໂດຍສະເພາະນັກຮຽນທີ່ດ້ອຍໂອກາດ, ຜູ້ຮຽນດີຮຽນເກັ່ງຂອງໂຮງຮຽນ ເພື່ອໃຫ້ກຳລັງໃຈ ແລະ ເປັນພາຫະນະອຳນວຍຄວາມສະດວກຂອງນ້ອງໆນັກຮຽນ.

**(ວິມັດ ສີສຸລາດ)**




# ໜີບໍ່ພົ້ນກຳ

**# ດົ້ນກົບເມກ**

ຫຼັກກຳ-ກົດແຫ່ງກຳ ມັນແມ່ນກົດເກນວິທະຍາສາດ ແຕ່ຍ້ອນວ່າການສິ່ງຜົນຂອງກຳມັນເກີດຂຶ້ນໄວ ຫຼື ຊ້າຕ່າງກັນ ຄົນເຮົາຈຶ່ງບໍ່ເຊື່ອເລື່ອງເວນກຳ; ດັ່ງນັ້ນ, ຜູ້ບໍ່ເຊື່ອເລື່ອງເວນກຳ ກໍຈະບໍ່ເອົາໃຈໃສ່ໃຫ້ຄຸນຄ່າການປະພຶດສຸດຈະລິດ ທັງກາຍ-ວາຈາ ແລະ ຈິດໃຈ ຈຶ່ງຫັນໄປທາງທຸດຈະລິດ, ບາງຄົນຫຼົງມົວສູງແຕ່ການເວົ້າຈາອາດສຸພາບອ່ອນຫວານ ແຕ່ພຶດຕິກຳປ່າເຖື່ອນຂາດມະນຸດສະທຳກໍມີ ຫຼື ເວົ້າໄດ້ວ່າປາກປາໄສເອົາໃຈເຊືອດຄໍ. ສະນັ້ນ, ຄົນເຮົາຈຶ່ງເວົ້າວ່າບໍ່ມີໃຜສອງເຫັນຈິດໃຈກັນໄດ້.

ເລື່ອງກົດແຫ່ງກຳ ຫຼື ເວນກຳນັ້ນ ມັນເຮັດໜ້າທີ່ຍຸຕິທຳສະເໝີ ເພາະເຮັດໜ້ອຍໄດ້ໜ້ອຍ ເຮັດຫຼາຍໄດ້ຫຼາຍ, ປູກຖົ່ວກໍໄດ້ໝາກຖົ່ວ, ເຮັດຊົ່ວ ກໍໄດ້ຮັບຜົນເປັນບາບ (ກຳຊົ່ວ) ຕິດໂຕຄືກັບເງົາຕາມໂຕ ເຖິງວ່າບາງຄົນອາດສາມາດເຊື່ອງຊ້ອນຫຼົບຫຼີກໄດ້ຊົ່ວຄາວ ແຕ່ອະນາຄົດຂ້າງໜ້າມັນສົ່ງຜົນແນ່ນອນ ຄືກັບເຮົາສ້າງຄວາມດີ-ສ້າງບຸນກຸສົນ ຜົນຂອງມັນກໍພາໃຫ້ຊີວິດມີຄວາມສຸກ. ຜູ້ຂຽນຍົກຕົວຢ່າງ: ເລື່ອງການໃຫ້ທານທີ່ຈະໄດ້ບຸນຫຼາຍ ກໍຍ້ອນວ່າຈິດໃຈຜູ້ໃຫ້ທານບໍລິສຸດ ສະອາດ, ຂອງທີ່ຈະເອົາໄປທານກໍໄດ້ມາດ້ວຍຄວາມບໍລິສຸດ ຜົນທີ່ເກີດຈາກທານນັ້ນ ກໍສ້າງຜົນດີແກ່ຜູ້ໃຫ້ທານ ເອີ້ນວ່າໄດ້ບຸນ ເພາະໄດ້ສ້າງຄວາມດີ; ແຕ່ຖ້າວ່າວັດຖຸຂອງທານໄດ້ມາດ້ວຍທາງທຸດຈະລິດ ຜົນບຸນກໍຈະບໍ່ໄດ້ ເຊັ່ນວ່າ ຊັບສິນເງິນຄຳໄປໂກງເຂົາ-ຍາດຊິງເຂົາມາ ຫວັງແບ່ງເອົາໄປທານເພື່ອໄດ້ບຸນ ມັນກໍບໍ່ເກີດ ເພາະວັດຖຸທານບໍ່ສະອາດ ການຫາຊັບແບບທຸດຈະລິດ, ເລື່ອງນີ້ຄືກົດຂອງກຳທີ່ພຸດທະສາສະໜາສອນໄວ້ຊັດເຈນ ຕ່າງແຕ່ວ່າຜູ້ມີໜ້າທີ່ເທດສອນຫຼາຍຄົນເຂົາບໍ່ແຈກແຈງ-ນຳມາສອນໃຫ້ຜູ້ຟັງທຳໃຫ້ເຂົ້າໃຈແຈ້ງໃນຫຼັກຂອງກຳ.

ການສອນບໍ່ແຈ້ງ ຫຼື ບໍ່ນຳຄວາມຈິງມາສອນ, ຊາວບ້ານເຂົາກໍສັບສົນ (ບໍ່ຮູ້ຫຼັກ-ບໍ່ຮູ້ທຳມະ) ຫຼື ບາງທີ ຜູ້ສອນກໍຮູ້ແຕ່ເລື່ອງທານຢ່າງດຽວ, ບໍ່ຮູ້ທຳມະເລິກເຊິ່ງ ກໍສອນແຕ່ເລື່ອງຜີວເຜີນ (ເປືອກ) ບໍ່ສອນເຂົ້າຫາແກ່ນທຳ...!






# ວິທີເຮັດວຽກ

**ພາກທີ 6**

**ວິທີນຳ**

ວິທີຮ່ຳຮຽນ: ໃຫ້ຈັດຕັ້ງເປັນແຕ່ລະຄະນະກຳມະການຂັ້ນສູງ ຫຼື ຂັ້ນກາງ. ເອົາການຮຽນໂດຍຕົນເອງເປັນຫຼັກ ເອົາການຖົກຖຽງລວມໝູ່ ແລະການນຳພາເປັນການຊ່ວຍເຫຼືອ.

ການຈັດຕັ້ງວາງເວລາ ແລະ ບົດຮຽນໃຫ້ແຕ່ລະຫ້ອງຮຽນ ຕ້ອງໃຫ້ຄ່ອງແຄ້ວ. ບົດຮຽນນັ້ນຕ້ອງມີການພົວພັນເຖິງກັນ ແຕ່ຢ່າໃຫ້ຂັດແຍ່ງກັນ.

ບໍ່ວ່າວຽກການໃນພະແນກໃດ, ຫ້ອງຮຽນໃດກໍຕ້ອງເດັດດ່ຽວຕ້ານຍັນພະຍາດໃນເຮົາ, ພະຍາດໃຈແຄບ ແລະ ພະຍາດເປັນແຕ່ປາກ, ບັນຫາເອກະສານອົບຮົມ ຕ້ອງໃຫ້ຄະນະນຳພາກວດກາ ແລະ ເຫັນດີນຳເສຍກ່ອນ.

ວິທີອົບຮົມດັ່ງວ່າມານີ້, ແມ່ນວິທີອົບຮົມຍາວນານ. ດັ່ງນັ້ນຈຶ່ງວາງຫຼັກໄວ້ວ່າແມ່ນເພື່ອຂະຫຍາຍວິຊາຊີບ ແຕ່ບໍ່ໃຫ້ກີດຂວາງວິຊາຊີບ ແລະ ສຸຂະພາບຂອງພະນັກງານ. ຢູ່ຕາມສຳນັກງານແຕ່ລະມື້ຕ້ອງຮຽນຢ່າງໜ້ອຍ 1 ຊົ່ວໂມງ. ຕາມບ່ອນທີ່ຢູ່ໃນພາວະຕໍ່ຕ້ານພິເສດ, ຈັດວາງເວລາຮຽນໃຫ້ຍາວ ຫຼື ສັ້ນ ສຸດແລ້ວແຕ່ສະພາບການໃນທ້ອງຖິ່ນຈະອຳນວຍ. ສ່ວນໂມງຮຽນນັ້ນຄວນໃຫ້ກະໂມງເຮັດວຽກ. ເວລາຈະເລື່ອນຊັ້ນພະນັກງານນັ້ນ ຕ້ອງສັງເກດເບິ່ງຜົນຂອງການຮຽນ ແລະ ຂອງການເຮັດວຽກການຂອງເຂົາເຈົ້ານຳດ້ວຍ.

- ວິທີກວດກາ, ສອບເສັງ, ສັນລະເສີນ ຫຼື ລົງໂທດໃນຫ້ອງຮຽນນັ້ນແມ່ນສູນກາງເປັນຜູ້ວາງ.

- ສຳນັກງານຕ່າງໆຕ້ອງເອົາໃຈໃສ່ການອົບຮົມພະນັກງານ; ຕ້ອງຄັດເລືອກຄົນມາເປັນຜູ້ກຳກັບ ແລະ ຊ່ວຍວຽກງານໃນການອົບຮົມນັ້ນໃຫ້ຄັກແນ່; ພວກຜູ້ນຳໃນຫ້ອງອົບຮົມນີ້ຕ້ອງໄປຮ່ວມເຮັດການສອນໂດຍຕົນເອງ; ບໍ່ຄວນເຮັດເຄັ່ງເກີນໄປກ່ຽວກັບການໃຊ້ຈ່າຍຕ່າງໆສຳລັບການອົບຮົມນີ້, ໝາຍຄວາມວ່າການກິນຢູ່ຕ້ອງໃຫ້ເໝາະສົມກັບຄວາມຍາກ ຫຼື ງ່າຍຂອງການຮຽນ.

ອ່ານຕໍ່ສະບັບໜ້າ...



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ທ່ານລັດຖະມົນຕີແລະຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຕາມຂອບເຂດສິດແລະໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍເປັນຕົ້ນ ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການດັດແກ້ອາຍຸສັນຍາສຳປະທານໂຄງການປູກຢາງພາລາ, ໄມ້ໃຫ້ໝາກ ແລະການສ້າງຕັ້ງໂຮງງານປຸງແຕ່ງຜະລິດຕະພັນກະສິກຳ ຢູ່ແຂວງເຊກອງ ແລະ ແຂວງອັດຕະປື; ບົດລາຍງານຜົນການລົງເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ ແລະປະເມີນການຈັດຕັ້ງປະຕິບັດວຽກງານການຂຸດຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ເກືອໂປຣຕາສ (ເກືອກາລີ) ຢູ່ນະຄອນຫຼວງວຽງຈັນ; ບົດລາຍງານການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການປັບປຸງຮ່າງມະຕິວ່າດ້ວຍການຮັບຮອງ ແລະຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍ ທີ່ພົວພັນໂຄງການສາຍສົ່ງສະໜອງໄຟຟ້າໃຫ້ທາງລົດໄຟ ລາວ-ຈີນ; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການສະເໜີຂໍພິຈາລະນາຮັບຮອງລະດັບຄວາມສູງຂອງຕຶກອາຄານໂຄງການພັດທະນາທີ່ດິນ ເຂດຕຶກເກົ່າກົມໃຫຍ່ພະລາທິການ, ກະຊວງປ້ອງກັນຄວາມສະຫງົບ ຢູ່ບ້ານພະໂພ ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ແລະ ການກໍ່ສ້າງອາຄານ ຢູ່ບ້ານສີບຸນເຮືອງ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ເພື່ອພັດທະນາສ້າງເປັນໂຮງແຮມ, ຄອນໂດມິນຽມແລະສູນການຄ້າຄົບວົງຈອນ; ບົດລາຍງານກ່ຽວກັບການຈັດສັນງົບປະມານປີ 2025 ແລະ ການສະເໜີຂໍຈັດສັນງົບປະມານເພີ່ມຂອງບັນດາອົງການລັດ; ບົດລາຍງານກ່ຽວກັບຫົວຂໍ້ ແລະ ການກຳນົດເວລາດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX; ບົດລາຍງານຂໍທິດຊີ້ນຳກ່ຽວກັບການຄັດເລືອກຜົນງານ 5 ປີ ຂອງສະມາຊິກສະພາແຫ່ງຊາດຊຸດທີ IX (2021-2025) ເພື່ອສະເໜີຂໍການຍ້ອງຍໍ; ບົດລາຍງານຜົນການຮຽບຮຽງກົດໝາຍ 2 ສະບັບ ຄື: ກົດໝາຍວ່າດ້ວຍທີ່ຢູ່ອາໄສ(ສ້າງໃໝ່)ແລະກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ແລະ ລາຍງານຄືນການປັບປຸງເນື້ອໃນກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຕາມຄຳເຫັນຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ; ບົດລາຍງານຜົນການທາບທາມຮ່າງລັດຖະທຳມະນູນສະບັບປັບປຸງປີ 2025 ເຊິ່ງໄດ້ດຳເນີນຢູ່ 7 ຈຸດທົ່ວປະເທດ; ບົດລາຍງານຄວາມຄືບໜ້າການກະກຽມຕ້ອນຮັບປະທານສະພາສູງແຫ່ງລາຊະອານາຈັກກຳປູເຈຍ, ປະທານພັກປະຊາຊົນກຳປູເຈຍ; ບົດລາຍງານຄວາມຄືບໜ້າການສ້າງປຶ້ມ "50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດແຫ່ງສປປລາວແລະສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ"; ບົດລາຍງານຜົນການຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ ຈຳນວນ 4 ເລື່ອງ; ບົດລາຍງານກ່ຽວກັບວຽກງານບຸກຄະລາກອນຈຳນວນໜຶ່ງຂອງ ສະພາແຫ່ງຊາດ ແລະສະພາປະຊາຊົນຂັ້ນແຂວງ; ແລະວຽກງານອື່ນຈຳນວນໜຶ່ງ.

**(ນາງ ກຸກກິກ ບຸດດາໄຊ)**

## ກສຊ...

(ຕໍ່ຈາກໜ້າ 1)

ງານ 5 ປີ (2026-2030) ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃນໄລຍະຜ່ານມາ, ທິດທາງແຜນການຄາດໝາຍສູ້ຊົນໃນປີ 2025 ແລະ ແຜນການ 5 ປີ (2026-2030). ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນ ແລະ ພິຈາລະນາຢ່າງເລິກເຊິ່ງ ຕໍ່ກັບສະພາບຕົວຈິງໃນການຈັດຕັ້ງປະຕິບັດໃຫ້ບັນລຸຜົນຕາມແຜນການທີ່ວາງໄວ້.

ທ່ານ ຄຳໃບ ດຳລັດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານ ແລະ ການເຄື່ອນໄຫວວຽກງານທີ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ຍາດມາໄດ້ຜົນງານອັນພົ້ນເດັ່ນຫຼາຍດ້ານຕະຫຼອດໄລຍະ 1 ປີທີ່ຜ່ານມາທັງຮຽກຮ້ອງທຸກພາກສ່ວນທີ່ກ່ຽວຂ້ອງຂອງແຂວງສືບຕໍ່ເອົາໃຈໃສ່ຄົ້ນຄວ້າ, ກຳແໜ້ນບັນດາເນື້ອໃນ, ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນກຳແໜ້ນເນື້ອໃນຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ບັນດາມະຕິຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ສະພາປະຊາຊົນແຂວງ ແລະ ຄະນະປະຈຳສະພາປະຊາຊົນແຂວງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານການເມືອງຂອງຕົນໃຫ້ໜັກແໜ້ນ.

**(ເອື້ອ ມະໂນສິງ)**






## ສຳເລັດ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງກຳມະບານຮາກຖານຄະນະເລຂາທິການສະພາແຫ່ງຊາດ (ຄລສ) ໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນທີ 31 ມັງກອນ 2025 ໂດຍການເປັນປະທານຮ່ວມຂອງສະຫາຍນາງອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ຄະນະປະຈຳພັກ, ເລຂາຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ, ສະຫາຍ ໂພສີ ເຕັມເມລາດ ຮອງປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ(ສພຊ), ສະຫາຍເປຄຳ ລໍຄຳສອນ ຮັກສາການປະທານກຳມະບານຮາກຖານຄະນະເລຂາທິການສະພາແຫ່ງຊາດ; ມີຜູ້ແທນສົມບູນ ແລະ ບັນດາສະຫາຍຕາງໜ້າຈາກໜ່ວຍກຳມະບານຮາກຖານອ້ອມຂ້າງ ແລະແຂກຖືກເຊີນເຂົ້າ ຮ່ວມ.

ກອງປະຊຸມໄດ້ເປັນເອກະພາບຮັບຮອງເອົາບົດລາຍງານການເມືອງ ເຊິ່ງໄດ້ຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ, ບາງບົດຮຽນທີ່ຖອດຖອນໄດ້ໃນການຊີ້ນຳ-ນຳພາ ແລະ ການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ (ປີ 2019-2024) ແລະ ທິດທາງແຜນການ 5 ປີ ນັບແຕ່ປີ 2025-2029; ພ້ອມນັ້ນ, ຜູ້ແທນກອງປະຊຸມໄດ້ພ້ອມກັນໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະກຳມະບານຮາກຖານຄະນະເລຂາທິການສະພາແຫ່ງຊາດຊຸດໃໝ່ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ຖືກຕ້ອງສອດ ຄ່ອງກັບມາດຕະຖານ ແລະ ເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ອອກຮັບສະໝັກເລືອກຕັ້ງ 11 ສະຫາຍແລະເລືອກໄດ້ 7 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງກຳມະບານຮາກຖານ ຄລສ ສະໄໝທີ II ໄດ້ເປັນເອກະພາບເລືອກເອົາສະຫາຍ ຂັນທອງ ແພງສີໃຈ ເປັນປະທານ, ສະຫາຍ ໄຊປັນຍາ ພົມວິຫານ ເປັນຮອງປະທານ ທັງເປັນປະທານກວດກາ, ສະຫາຍຂັນທອງ ເຜີ່ງລາສີ ເປັນຮອງປະທານກວດກາ, ສະຫາຍ ແກ້ວລະກາ ຊ້ອຍໄຊຍະ, ສະຫາຍ ປອ. ຈັນທີ ປັດຊະຍາ, ສະຫາຍ ພົນລາວັນ ວິໄລທອງ ແລະ ສະຫາຍຄຳສິງ ທາດາສະຫວັນ ເປັນກຳມະການ.

ສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ໂອ້ລົມ ແລະໃຫ້ທິດຊີ້ນຳ ເຊິ່ງສະຫາຍໄດ້ຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານການເຄື່ອນໄຫວ ແລະການສ້າງຂະບວນການຕ່າງໆ ທີ່ບັນດາສະຫາຍສະມາຊິກກຳມະບານໄດ້ຕັ້ງໜ້າປະກອບສ່ວນຈັດຕັ້ງປະຕິບັດຢ່າງຫ້າວຫັນຕິດພັນກັບການພັດທະນາວຽກງານວິຊາສະເພາະຂອງຄະນະເລຂາທິການສະພາແຫ່ງຊາດໃນໄລຍະຜ່ານມາ ໂດຍສະເພາະການເປັນເສນາທິການໃຫ້ແກ່ຄະນະເລຂາທິການ ແລະ ຄະນະປະຈຳສະພາແຫ່ງຊາດ ເປັນຕົ້ນວຽກງານຈັດຕັ້ງ-ພະນັກງານ, ວຽກງານກວດກາ, ວຽກງານເລຂານຸການ-ເນື້ອໃນ, ວຽກງານສື່ມວນຊົນ, ວຽກງານບໍລິຫານ-ພິທີການ, ວຽກງານການເງິນ-ງົບປະມານແລະວຽກງານຄຸ້ມຄອງເຄຫາສະຖານ ໄປຄຽງຄູ່ກັບການປະຕິບັດຂໍ້ແຂ່ງຂັນເນື້ອໃນ 5 ເປັນເຈົ້າ, ຂະບວນການຮັກຊາດ ແລະ ພັດທະນາ, ການກໍ່ສ້າງໜ່ວຍພັກໃຫ້ປອດໃສເຂັ້ມແຂງ ແລະ ໜັກແໜ້ນ; ພ້ອມນັ້ນ, ສະ ຫາຍຍັງໄດ້ເນັ້ນໜັກຕໍ່ຄະນະ ແລະ ສະມາຊິກກຳມະບານຮາກຖານຄະນະເລຂາທິການສະພາແຫ່ງຊາດຕ້ອງໄດ້ເອົາໃຈໃສ່ບຸກບືນແລະຈັດຕັ້ງປະຕິບັດໜ້າທີ່ການເມືອງໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ກອງປະຊຸມຍັງຮຽກຮ້ອງໃຫ້ຜູ້ແທນທຸກສະຫາຍ ຈົ່ງໄດ້ນຳເອົາເນື້ອໃນຈິດໃຈທັງໝົດຂອງກອງປະຊຸມໃຫຍ່ຄັ້ງທີ II ໂດຍສະເພາະແມ່ນທິດທາງແລະບັນດາຄາດໝາຍສູ້ຊົນຮອດປີ 2029 ໄປຈັດຕັ້ງປະຕິບັດຜັນຂະຫຍາຍເປັນອັນລະອຽດແລະເຜີຍແຜ່ໃຫ້ສະມາຊິກກຳມະບານທຸກສະຫາຍພາຍໃນໜ່ວຍກຳມະບານ ທີ່ຂຶ້ນກັບກຳມະບານຮາກຖານຄະນະເລຂາທິການສະພາແຫ່ງຊາດ ເພື່ອຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງນີ້ ດ້ວຍຄວາມຮັບຜິດຊອບສູງ, ປາກົດຜົນເປັນຈິງ ແລະ ມີຜົນສຳເລັດຢ່າງຈົບງາມ.

**(ນາງ ອາລິນ ສຸພົມມະປະກົດ)**




## ຮອງປະທານ...

(ຕໍ່ຈາກໜ້າ 1)

ເມືອງສົບເບົາ ກ່ຽວກັບວຽກງານຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ຈາກນັ້ນ, ກໍເຂົ້າຮ່ວມພິທີເປີດຂົວອູ່ບ້ານໂພນໄຊ, ບ້ານນາກາ ແລະ ຮ່ວມງານບຸນປະເພນີບ້ານໂພນໄຊ, ບ້ານສົບຮາວ. ທ່ານຍັງໄດ້ໄປຢ້ຽມຢາມບ້ານເກີດຂອງຕົນທີ່ບ້ານກົກໄຊ, ງານບຸນປະເພນີຂອງບ້ານສົບມອນ, ບ້ານນາໜອງ, ບ້ານນາຕອງ, ບ້ານຫາດກູ້, ບ້ານພຽງລູ້, ບ້ານພຽງຢາງ ແລະ ຢ້ຽມຢາມ-ພົບປະໂອ້ລົມການນຳ, ພະນັກງານ-ລັດຖະກອນພາຍໃນເມືອງຊຽງຄໍ້ ແລະ ເມືອງແອດ ອີກດ້ວຍ.

ການເຄື່ອນໄຫວຄັ້ງນີ້, ຍັງໄດ້ມອບເງິນສົດເພື່ອສະໜັບສະໜູນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຂອງອົງຄະນະພັກເມືອງ ເມືອງລະ 10 ລ້ານກີບ; ພ້ອມນັ້ນ, ຍັງໄດ້ນຳເອົາອຸປະກອນການຮຽນ-ການສອນ, ອຸປະກອນກິລາ ແລະ ກະຕ່າຂອງຂວັນ ລວມທັງເງິນສົດ ມອບໃຫ້ແກ່ອຳນາດການປົກຄອງບ້ານ, ເມືອງເຂົ້າໃນການບໍລິຫານ, ຮັບໃຊ້ວຽກງານລວມ ເປັນມູນຄ່າ 30 ລ້ານກວ່າກີບ.

**(ບຸນແພງ ພຸຍພັກດີ)**

## ໜ່ວຍກຳມະບານ...

(ຕໍ່ຈາກໜ້າ 1)

ກອງປະຊຸມໄດ້ເຫັນດີ ແລະ ຮັບຮອງເອົາບົດລາຍງານການເມືອງ ເຊິ່ງໄດ້ຕີລາຄາດ້ານດີ, ດ້ານອ່ອນ, ສາເຫດແລະບົດຮຽນທີ່ຖອດຖອນໄດ້ ຕະຫຼອດການເຄື່ອນໄຫວວຽກງານຂອງໜ່ວຍກຳມະບານຮາກຖານກຳມາທິການແຜນການ, ການເງິນ ແລະ ການກວດສອບ ຄັ້ງທີ I ທີ່ຜ່ານມາແລະແຜນການເຄື່ອນໄຫວແຕ່ນີ້ຮອດປີ 2029; ບົດສຳຫຼວດການນຳພາຂອງຄະນະໜ່ວຍກຳມະບານຮາກຖານຊຸດທີIທີ່ໄດ້ຢ້ຳຄືນຜົນສຳເລັດຂອງການນຳພາວຽກງານກຳມະບານຕິດພັນກັບວຽກງານວິຊາສະເພາະໃນແຕ່ລະດ້ານທັງເປັນການຖອດຖອນບົດຮຽນເພື່ອເປັນບ່ອນອີງໃຫ້ແກ່ຄະນະໜ່ວຍກຳມະບານຮາກຖານ ກຜງສ ຊຸດທີ II ນຳໄປຈັດຕັ້ງປະຕິບັດ ແລະ ປັບປຸງແກ້ໄຂບັນດາຂໍ້ຄົງຄ້າງ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງກຳມະບານຮາກຖານມີຄວາມຖືກຕ້ອງ ແລະ ສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ ກໍຄືຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງກຳມະບານຮາກຖານ ໃຫ້ປາກົດຜົນເປັນຈິງ.

ຜູ້ແທນກອງປະຊຸມໄດ້ພ້ອມກັນໃຊ້ສິດປ່ອນບັດເລືອກຕັ້ງເອົາຄະນະໜ່ວຍກຳມະບານຮາກຖານກຳມາທິການແຜນການ, ການເງິນ ແລະ ການກວດສອບ ຊຸດທີ II ບົນພື້ນຖານຫຼັກການລວມສູນປະຊາທິປະໄຕທັງສອດຄ່ອງກັບມາດຕະຖານຕາມທີ່ໄດ້ກຳນົດໄວ້ເຊິ່ງມີຜູ້ອອກສະໝັກຮັບເລືອກຕັ້ງ 7 ສະຫາຍ ຍິງ 3 ສະຫາຍ, ເລືອກເອົາ 5 ສະຫາຍ ຄື: ສະຫາຍ ວົງວິໄລ ອິນທະມີໄຊ ເປັນປະທານ, ສະຫາຍ ນາງ ສຸກສາຄອນ ສິດທິບັນດິດ ເປັນຮອງປະທານ, ສະຫາຍ ສຸດໃຈ ລີໄກຢາ ເປັນຮອງປະທານ ທັງເປັນປະທານກວດກາ, ສະຫາຍ ນາງ ເຢີຊົງ ປັດໃຈ ແລະ ສະຫາຍ ທິບພະວົງ ບຸດທະສະວົງ ເປັນກຳມະການ.

ສະຫາຍ ປອ. ລີເບີ ລີບົວປາວ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດໃນການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານຂອງກຳມະບານຮາກຖານກຳມາທິການແຜນການ, ການເງິນ ແລະ ການກວດສອບທີ່ສາມາດຍາດມາໄດ້ໃນໄລຍະຜ່ານມາ ທັງເນັ້ນໜັກໃຫ້ກຳແໜ້ນພາລະບົດບາດ, ສິດ ແລະ ໜ້າທີ່ການເຄື່ອນໄຫວວຽກງານກຳມະບານ; ເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ແນວຄິດ ເພື່ອໃຫ້ມີຄວາມອຸ່ນອຽນທຸ່ນທ່ຽງ, ມີຄວາມຫ້າວຫັນ, ມີການປະດິດສ້າງໃໝ່ໃນການປະຕິບັດວຽກງານວິຊາສະເພາະ ໃຫ້ມີການຫັນປ່ຽນຢ່າງມີຈຸດສຸມ ແລະ ຄຸນນະພາບໃໝ່ ໂດຍສະເພາະວຽກງານເປັນເສນາທິການໃນການປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ; ເອົາໃຈໃສ່ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນກຳມະບານທົ່ວປະເທດ ກໍຄືມະຕິກອງປະຊຸມໃຫຍ່ຜູ້ແທນກຳມະບານສະພາແຫ່ງຊາດ ໃນຕໍ່ໜ້າ ໃຫ້ບັນລຸຕາມຄາດໝາຍທີ່ກຳນົດໄວ້.

**(ອານຸສອນ ພູມມີທອນ)**

ອາດ ກະວີລາວ

# ເວົ້າໃຫ້ຖືກກາລະເທສະ

**# ຕ.ສະຫວັນ**

※ ຄົນເຮົາມີມາກລີ້ນ ຫຼາຍຫຼາກນິໄສ
ຈັກໃຜຄິດແນວໃດ ຊົ່ວດີ-ຫຼື-ຮ້າຍ
ເຮົາບໍ່ແນມດູໄດ້ ເດົາໃຈຄົນອື່ນ
ຝືນຍິ້ມດີຕໍ່ໜ້າ ລັບຫຼັງປ້ອຍດ່າເຮົາ ກໍມີ

※ ພໍ່ແມ່ສອນລູກເຕົ້າ ມາແຕ່ເດີມດາ
ບໍ່ຄວນຝຳພຶມຈາ ເມື່ອຍາມກິນເຂົ້າ
ເພາະວ່າອາຫານຫຍໍ້າ ຈະຟູມຟາຍເຮ່ຍ
ເສຍມາລະຍາດຍ້ອນ ຄົນເວົ້າກ່າວຫຍັນ

※ ຍາມກິນໂຕພັດເວົ້າ ຟອຍຢູ່ເລີຍເລີຍ
ຊິນເຄີຍເປັນນິໄສ ຄູ່ກາຍຕົນແລ້ວ
ບໍ່ວ່າກິນນຳຫົວໜ້າ ຫຼືເວລາມີວຽກ
ນ້ຳລາຍໄຫຼປຽກເປື້ອນ ຟອຍເລື້ອຍບໍ່ເຊົາ

※ ບ່ອນທີ່ເຂົາຈັດໃຫ້ ສະຖານທີ່ກອງປະຊຸມ
ຄືບໍ່ຫານວາຈາ ກ່າວຄຳຂານເວົ້າ
ຍົກເຫດຜົນມາອ້າງ ເອກະສານຕ່າງໆ
ຢູ່ທ່າງຟອຍໝົດມື້ ແນວນີ້ຈຶ່ງດີ ວ່າບໍ່?

※ ຫາກໃຜເປັນແບບນີ້ ຄວນທີ່ພິຈາລະນາ
ຮຽມບໍ່ຫານວາຈາ ກ່າວເຕືອນຕິຕ້ອງ
ລອງມອງຄົນຄຽງຂ້າງ ກາຍເຮົາດູວ່າ
ມາລະຍາດຮຽບຮ້ອຍ ດີແທ້ສໍ່າໃດ ທ່ານເອີຍ !



## ສັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

**# ສຽມທຽນ**

※ ***ຊົມເຊີຍ****ວັນສ້າງຕັ້ງ**ສະຫະພັນກຳມະບານລາວ*** *ທີ່ໄດ້ໝູນວຽນມາບັນຈົບຄົບຮອບ* ***69 ປີ (1 ກຸມພາ 1956-1 ກຸມພາ 2025)*** *69 ປີກໍ່ຕັ້ງ ສະຫະພັນກຳມະບານລາວ ຕົວແທນຊາວຜູ້ອອກແຮງງານ ທີ່ອຸທາບີແຄວ້ນ ລ່ອງລອຍພອນໄຊກ້າ ການນຳພາທຸກພາກສ່ວນ ທັງປວງຊົນລາວພີ່ນ້ອງແຊງໝັ້ນສຸກຂີລ້ຳ* ***ຊອບແລ້ວ !***

※ ***ກອງ****ປະຊຸມສະໄໝສະມັບ**ເທື່ອທີ 8** ຂອງສະພາປະຊາຊົນແຂວງໃນຂອບເຂດທົ່ວປະເທດ* ***ໄດ້ເສັດສິ້ນ****ລົງໄປດ້ວຍຜົນສຳເລັດອັນຈົບງາມ* ***ຕາມວາລະ*** *ວາງຄາດໝາຍຕໍ່ໜ້າ* ***ຄືເຊີຍແຜ່****ຜົນງານການເຄື່ອນໄຫວ ເປັນຕົວແທນໄພ່ປະຊາຊາວເຊື້ອ ລາວແຕ່ເໜືອເຖິງໃຕ້ ຕາມກົດໝາຍກຳນົດ* ***ສາມພາລະບົດບາດ****ກ່າວໄວ້ ລ່ຈົ່ງໄດ້ສຳເລັດຜົນ* ***ບັ້ນທ້ອນ !***

## ຊອບຍິ້ມ

**# ແອ່ນຕຸ້ງ**

### ເລື່ອງ: ຜູ້ຢູ່ເບື້ອງຫຼັງ

ຢູ່ຟາມແຂ້ແຫ່ງໜຶ່ງ, ມີການແຂ່ງຂັນວ່າ: ຖ້າໃຜລົງໄປໃນໜອງທີ່ມີແຂ້ອາໄສຢູ່ ແລ້ວກັບຂຶ້ນມາຝັ່ງໄດ້ຢ່າງປອດໄພ ຈະໄດ້ຮັບເງິນລາງວັນ 10 ລ້ານກີບ, ເວລາຜ່ານໄປດົນເຕີບ ແຕ່ບໍ່ມີໃຜກ້າໂດດລົງໄປ...

**ຕູ້ມ...!!!**

ມີຊາຍໜຸ່ມຄົນໜຶ່ງໂດດລົງໄປໃນໜອງແຂ້, ແລ້ວຮີບຟ້າວລອຍຂຶ້ນຝັ່ງຢ່າງບໍ່ຄິດຊີວິດ ແລະ ປີນຂຶ້ນຝັ່ງໄດ້ຢ່າງປອດໄພ ທັງໜ້າຊີດ, ຫາຍໃຈເກືອບບໍ່ທັນ, ທຸກຄົນສະແດງຄວາມຍິນດີ ແລະ ມອບລາງວັນ 10 ລ້ານກີບໃຫ້.

ແຕ່ເຈົ້າຕົວໃນໂທສຸດຂີດ ພ້ອມທັງຮ້ອງຢ່າງສຸດສຽງ ພ້ອມຖາມວ່າ "ກູຢາກຮູ້ວ່າ ແມ່ນໃຜຖີບກູລົງໄປ" ແຕ່ພໍຫຼຽວໄປເບິ່ງບ່ອນທີ່ໂຕເອງຢືນ ເຫັນເມຍຢືນຈົ່ມຍິ້ມຢູ່ພ້ອມທັງເວົ້າວ່າ: "ຜົວທີ່ປະສົບຄວາມສຳເລັດທຸກຄົນຈະຕ້ອງມີເມຍທີ່ຄອຍຜັກດັນຢູ່ເບື້ອງຫຼັງສະເໝີ"!!!

## ຄະຕິເຕືອນໃຈ

**#ດອກຫຍ້າ**

ເຊື້ອຊາດຄັນຈ້ອງ ຄັນກ່ອງຍັງຫຸບ
ຍາມຊາຕາຫຼຸບ ຫຼຸບລົງຄືຈ້ອງ
ຍາມເມື່ອຊາຕາຂຶ້ນ ໃຊ້ຕິງລິງປາບສາງແຊ່ງ
ບາດຊິຫຼົ້ມ ຫຍຸມຫຍ້າໄວ້ກໍບໍ່ຟັງ

ລັດຖະສະພາຕ່າງປະເທດ

# ພູ Taranaki ໃນ New Zealand ໄດ້ຮັບສິດທາງກົດໝາຍເທົ່າກັບຄົນ

(BBC) - ຂໍ້ຕົກລົງກ່ຽວກັບການເຮັດໃຫ້ພູໜ່ວຍໜຶ່ງໃນປະເທດນູແວນເຊລັງ ໄດ້ຮັບສິດທາງກົດໝາຍເທົ່າທຽມກັບບຸກຄົນ ກາຍເປັນກົດໝາຍຢ່າງເປັນທາງການ ພາຍຫຼັງການເຈລະຈາເປັນເວລາຫຼາຍປີ.

ກົດໝາຍດັ່ງກ່າວ ຈະເຮັດໃຫ້ພູທາຣານາກິ ເປັນເຈົ້າຂອງຕົນເອງຢ່າງແທ້ຈິງ ໂດຍມີຕົວແທນຈາກຊາວອີວີ (iwi) ເຊິ່ງເປັນຊົນເຜົ່າທ້ອງຖິ່ນ ແລະ ລັດຖະບານ ເຮັດວຽກຮ່ວມກັນເພື່ອຄຸ້ມຄອງພູໜ່ວຍນີ້.

ຂໍ້ຕົກລົງຂ້າງເທິງ ມີຈຸດປະສົງເພື່ອຊົດເຊີຍໃຫ້ກັບຊາວເມົາຣີ (Maori) ຈາກພາກພື້ນທາຣານາກິ ສຳລັບຄວາມບໍ່ຍຸຕິທຳທີ່ເກີດຂຶ້ນກັບພວກເຂົາໃນຊ່ວງລ່າອານານິຄົມ ລວມທັງການຍຶດທີ່ດິນຢ່າງກວ້າງຂວາງ.

ທ່ານ ພອນ ໂກສະມິດ (Paul Goldsmith) ລັດຖະມົນຕີກະຊວງສື່ມວນຊົນແລະການສື່ສານ, ຜູ້ຮັບຜິດຊອບການເຈລະຈາ ກ່າວວ່າ "ເຮົາຕ້ອງຍອມຮັບຄວາມເຈັບປວດທີ່ເກີດຈາກຄວາມຜິດພາດໃນອະດີດ ເພື່ອທີ່ເຮົາຈະສາມາດເບິ່ງໄປສູ່ອະນາຄົດ ໃນການສະໜັບສະໜູນຊາວອີວີ ໃຫ້ບັນລຸຄວາມປາຖະໜາ ແລະ ໂອກາດຂອງຕົນເອງ".

ລັດຖະສະພາ ໄດ້ຮັບຮອງເອົາຮ່າງກົດໝາຍການຊົດໃຊ້ຮ່ວມພູທາຣານາກິ (Taranaki Maunga Collective Redress Bill) ຢ່າງເປັນທາງການ ເມື່ອວັນພະຫັດທີ 30 ມັງກອນຜ່ານມາ ໂດຍກຳນົດໃຫ້ພູໜ່ວຍນີ້ມີຊື່ທາງກົດໝາຍ ພ້ອມທັງປົກປັກຮັກສາຍອດພູ ແລະ ເຂດອ້ອມຂ້າງ.

ທ່ານ ໂກສະມິດ ຍອມຮັບວ່າການລະເມີດສົນທິສັນຍາໄວຕັງກິ (Waitangi) ເຮັດໃຫ້ຄອບຄົວໃຫຍ່, ຊົນເຜົ່າຍ່ອຍ ແລະ ຊາວອີວີ ໃນພາກພື້ນທາຣານາກິ ໄດ້ຮັບຜົນກະທົບຢ່າງໃຫຍ່ຫຼວງ ແລະ ເພີ່ມຂຶ້ນ ເຊິ່ງກໍ່ໃຫ້ເກີດຄວາມເສຍຫາຍທີ່ບໍ່ສາມາດປະເມີນຄ່າໄດ້ໃນໄລຍະຫຼາຍສິບປີທີ່ຜ່ານມາ; ເຖິງແນວໃດກໍຕາມ, ທ່ານກ່າວຕື່ມວ່າ ທຸກຝ່າຍທີ່ເຂົ້າຮ່ວມໃນການເຈລະຈາ ໄດ້ເຫັນດີເປັນເອກະສັນກັນວ່າ ການເຂົ້າເຖິງພູທາຣານາກິ ຈະບໍ່ປ່ຽນແປງແລະຊາວນູແວນເຊລັງທຸກຄົນ ຈະສາມາດຢ້ຽມຊົມ ແລະ ເພີດເພີນກັບສະຖານທີ່ອັນງົດງາມທີ່ສຸດແຫ່ງນີ້ໄດ້ຕໍ່ໄປອີກຫຼາຍຊົ່ວອາຍຸຄົນ.



# ສິງກະໂປ ບັງຄັບໃຊ້ກົດໝາຍເພື່ອຈັດການກັບ ໂຄສະນາການເລືອກຕັ້ງປອມທາງອອນລາຍ




(ຊິນຮວາ) - ກົດໝາຍການເລືອກຕັ້ງຂອງສິງກະໂປ (ຄວາມຊື່ສັດຂອງການໂຄສະນາອອນລາຍ) (ສະບັບປັບປຸງ) ເຊິ່ງປະກາດໃຊ້ໃນເດືອນຕຸລາ 2024, ມີຜົນບັງຄັບໃຊ້ຢ່າງເປັນທາງການ ເມື່ອວັນພຸດທີ 22 ມັງກອນ; ໃນຂະນະທີ່ປະເທດກະກຽມສຳລັບການເລືອກຕັ້ງທົ່ວໄປຄັ້ງຕໍ່ໄປ ເຊິ່ງຈະຕ້ອງຈັດຂຶ້ນພາຍໃນເດືອນພະຈິກ 2025.

ກົດໝາຍດັ່ງກ່າວ ໄດ້ປັບປຸງກົດໝາຍການເລືອກຕັ້ງກ່ອນໜ້ານີ້ ເພື່ອແກ້ໄຂໄພຂົ່ມຂູ່ທີ່ເພີ່ມຂຶ້ນຂອງການໂຄສະນາທາງອອນລາຍທີ່ປອມ ໂດຍສະເພາະໂຄສະນາທີ່ມີເນື້ອຫາກ່ຽວກັບຜູ້ສະໝັກທີ່ຖືກປັບແຕ່ງຫຼືປອມແປງທາງດິຈິຕອນ.

ກົດໝາຍສະບັບນີ້ຫ້າມການເຜີຍແຜ່ໂຄສະນາການເລືອກຕັ້ງທາງອອນລາຍທີ່ມີ "ຮູບພາບຂອງຜູ້ສະໝັກທີ່ແທ້ຈິງ ແຕ່ປອມ" ເຊິ່ງຕັ້ງໃຈເຮັດໃຫ້ຜູ້ລົງຄະແນນເຂົ້າໃຈຜິດຢ່າງຊັດເຈນ.

ຕົວຢ່າງ: ໂຄສະນາປອມອາດຈະສະແດງພາບຜູ້ສະໝັກກ່າວຄຳປາໄສຢູ່ວັດພ້ອມກັບຄຳບັນລະຍາຍທີ່ອ່ານວ່າ "ພວກເຮົາຈະສ້າງທີ່ຢູ່ອາໄສສາທາລະນະຢູ່ທີ່ດິນຜືນນີ້" ເຖິງແມ່ນວ່າຜູ້ສະໝັກຈະເວົ້າໃນຄຳປາໄສຂອງລາວແທ້, ແຕ່ຄວາມຈິງແລ້ວ, ມັນໝາຍເຖິງທີ່ດິນເປົ່າວ່າງຜືນອື່ນ. ພາຍໃຕ້ກົດໝາຍໃໝ່, ການບິດເບືອນຄວາມຈິງດັ່ງກ່າວເປັນການກະທຳຜິດ.

ນອກຈາກກົດໝາຍທີ່ມີຜົນບັງຄັບໃຊ້ແລ້ວ, ໃນວັນດຽວກັນ ສິງກະໂປ ຍັງໄດ້ສ້າງຕັ້ງຄະນະກຳມະການກວດກາຄືນເຂດເລືອກຕັ້ງ ເພື່ອກວດກາຄືນເຂດເລືອກຕັ້ງຂອງປະເທດ ເຊິ່ງເປັນຂໍ້ກຳນົດເບື້ອງຕົ້ນກ່ອນການເລືອກຕັ້ງທົ່ວໄປ.

ນາຍົກລັດຖະມົນຕີ ລໍເຣນ ຫວອງ (Lawrence Wong) ຈະນຳພາພັກກິດປະຊາ (People's Action Party) ຜັກກຳອຳນາດເຂົ້າສູ່ການເລືອກຕັ້ງຄັ້ງຕໍ່ໄປ ເຖິງແມ່ນວ່າຍັງບໍ່ໄດ້ປະກາດວັນລົງຄະແນນສຽງທີ່ແນ່ນອນ, ແຕ່ສື່ມວນຊົນທ້ອງຖິ່ນລາຍງານວ່າ ໃນການເລືອກຕັ້ງ 4 ຄັ້ງທີ່ຜ່ານມາ, ໄລຍະເວລານັບແຕ່ການສ້າງຕັ້ງຄະນະກຳມະການກຳນົດເຂດເລືອກຕັ້ງ ຈົນຮອດວັນປ່ອນບັດ ແມ່ນຢູ່ລະຫວ່າງ 4-11 ເດືອນ.

# ອັງກິດ ປະເທດທຳອິດໃນໂລກ ອອກກົດໝາຍຄຸ້ມຄອງ "ເຄື່ອງມື AI ລ່ວງລະເມີດເດັກ"




(REUTERS) - ອັງກິດຈະກາຍເປັນປະເທດທຳອິດໃນໂລກ ທີ່ອອກກົດໝາຍຕໍ່ຕ້ານເຄື່ອງມືປັນຍາປະດິດ (AI) ທີ່ຖືກໃຊ້ເພື່ອສ້າງຮູບພາບການລ່ວງລະເມີດທາງເພດເດັກ.

ວັນທີ 1 ກຸມພານີ້, ທ່ານນາງ ອີເວັດຕ໌ ຄູເປີ (Yvette Cooper) ລັດຖະມົນຕີກະຊວງພາຍໃນອັງກິດເປີດເຜີຍວ່າລັດຖະບານລອນດອນ ຈະກຳນົດໃຫ້ການຄອບຄອງ, ການສ້າງ ແລະການແຈກຢາຍເຄື່ອງມື AI ທີ່ອອກແບບມາເພື່ອສ້າງຮູບພາບລ່ວງລະເມີດທາງເພດເດັກເປັນສິ່ງຜິດກົດໝາຍ, ໂດຍມີໂທດຕິດຄຸກສູງສຸດ 5 ປີ; ໃນຂະນະດຽວກັນ, ການຄອບຄອງ "ປຶ້ມຄູ່ມືສຳລັບຜູ້ມັກລ່ວງລະເມີດທາງເພດເດັກ" (paedophile manuals) ທີ່ສອນຜູ້ຄົນກ່ຽວກັບວິທີການນຳໃຊ້ AI ເພື່ອລ່ວງລະເມີດທາງເພດເດັກ ຈະມີໂທດຕິດຄຸກສູງສຸດ 3 ປີ.

ລັດຖະບານລອນດອນລະບຸໄວ້ໃນຖະແຫຼງການວ່າ: ເດັກຈະໄດ້ຮັບການປົກປ້ອງຄຸ້ມຄອງຈາກໄພຂົ່ມຂູ່ທີ່ເພີ່ມຂຶ້ນຂອງຜູ້ສ້າງຮູບພາບ AI ແລະການລ່ວງລະເມີດທາງເພດທາງອອນລາຍ, ເນື່ອງຈາກອັງກິດຈະກາຍເປັນປະເທດທຳອິດໃນໂລກ ທີ່ກຳນົດຄວາມຜິດການລ່ວງລະເມີດທາງເພດດ້ວຍ AI; ນອກຈາກນີ້, ຍັງລະບຸຕື່ມວ່າ: ກົດໝາຍໃໝ່ ຈະກຳນົດໃຫ້ຜູ້ດູແລເວັບໄຊ ທີ່ອອກແບບເພື່ອໃຫ້ຜູ້ມັກລ່ວງລະເມີດທາງເພດເດັກ ແບ່ງປັນເນື້ອຫາການລ່ວງລະເມີດທາງເພດເດັກ ຫຼື ຄຳແນະນຳກ່ຽວກັບວິທີການຫຼອກລວງເດັກ, ເປັນຜູ້ກະທຳຜິດທາງອາຍາ ເຊິ່ງຈະໄດ້ຮັບໂທດຕິດຄຸກສູງສຸດ 10 ປີ.

# Greece ເລືອກປະທານລັດຖະສະພາຄົນໃໝ່



(Xinhua) - ທ່ານ ນິກິຕາສ ຄາກລາມານິສ (Nikitas Kaklamanis) ສະມາຊິກລັດຖະສະພາອາວຸໂສຈາກພັກປະຊາທິປະໄຕໃໝ່ (New Democracy - ND) ເຊິ່ງເປັນພັກລັດຖະບານຂອງສາທາລະນະລັດເກຼັກ, ໄດ້ຮັບເລືອກຕັ້ງເປັນປະທານລັດຖະສະພາ ເມື່ອວັນພຸດທີ 22 ມັງກອນຜ່ານມາ ໂດຍໄດ້ຮັບຄະແນນ 247 ສຽງ ຈາກສະມາຊິກທັງໝົດ 300 ທ່ານ.

ທ່ານ ຄາກລາມານິສ ເຂົ້າດຳລົງຕຳແໜ່ງຕໍ່ຈາກທ່ານຄອນສະແຕນຕິນ ທັສຊູລາສ (Constantine Tassoulas) ທີ່ລາອອກໜຶ່ງອາທິດກ່ອນໜ້ານີ້ ຫຼັງຈາກມີການປະກາດສະເໜີຊື່ໃຫ້ເປັນຕົວແທນຂອງພັກ ND ອອກສະໝັກຮັບຕຳແໜ່ງປະທານາທິບໍດີ.

ທ່ານ ຄາກລາມານິສ ກ່າວຄຳປາໄສຢູ່ລັດຖະສະພາວ່າ: ລັດຖະສະພາ ແມ່ນ "ແວ່ນແຍງ" ທີ່ສ່ອງແສງໃຫ້ເຫັນພາບພົດຂອງຜູ້ມີສິດເລືອກຕັ້ງ ແລະ ໃນຂະນະດຽວກັນ, ຄວນເປັນແບບຢ່າງໃນການກະທຳ ແລະ ສົນທຳໃຫ້ກັບປະຊາຊົນ.

ທ່ານຄາກລາມານິສອາຍຸ 78 ປີ ດຳລົງຕຳແໜ່ງຮອງປະທານລັດຖະສະພາ ຕັ້ງແຕ່ປີ 2015 ໂດຍໄດ້ຮັບເລືອກຕັ້ງເປັນສະມາຊິກລັດຖະສະພາຄັ້ງທຳອິດເມື່ອ 35 ປີກ່ອນ, ທ່ານຍັງເຄີຍດຳລົງຕຳແໜ່ງເປັນສະມາຊິກລັດຖະສະພາເອີຣົບ ແລະ ເຈົ້າຄອງນະຄອນຫຼວງອາແຕນ (Athens) ອີກດ້ວຍ.

# ສະພານິຕິບັນຍັດ ສປປເກົາຫຼີ ດຳເນີນ ກອງປະຊຸມສະໄໝສາມັນເທື່ອທີ 12



(ຊິນຮວາ)-ສື່ມວນຊົນແຫ່ງລັດລາຍງານເມື່ອວັນສຸກທີ 24 ມັງກອນຜ່ານມາວ່າ ສະພາປະຊາຊົນສູງສຸດສປປເກົາຫຼີໄດ້ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານຂອງຄະນະລັດຖະມົນຕີ ແລະ ການສາບານຕົນເຂົ້າຮັບຕຳແໜ່ງນາຍົກລັດຖະມົນຕີຄົນໃໝ່.

ກອງປະຊຸມສະໄໝສາມັນເທື່ອທີ 12 ຂອງສະພາປະຊາຊົນສູງສຸດ ສປປເກົາຫຼີ ຊຸດທີ XIV ໄດ້ດຳເນີນໃນວັນທີ 22-23 ມັງກອນ 2025 ເຊິ່ງໄດ້ພິຈາລະນາແລະຮັບຮອງເອົາຫຼາຍບັນຫາສຳຄັນ ລວມເຖິງການປະເມີນຜົນການປະຕິບັດວຽກງານຂອງຄະນະລັດຖະມົນຕີ ໃນປີທີ່ຜ່ານມາ ແລະ ວຽກງານໃນປີນີ້ ຕະຫຼອດຈົນປະເດັນງົບປະມານຂອງລັດ, ຕາມສຳນັກຂ່າວສູນກາງເກົາຫຼີ (Korean Central News Agency - KCNA) ລາຍງານຢ່າງເປັນທາງການ.

ໃນບົດລາຍງານກ່ຽວກັບການປະຕິບັດວຽກງານຂອງຄະນະລັດຖະມົນຕີ ຕໍ່ສະພາປະຊາຊົນສູງສຸດ, ທ່ານ ປັກ ແທ ຊອງ (Pak Thae Song) ນາຍົກລັດຖະມົນຕີຄົນໃໝ່ໄດ້ວິເຄາະແລະປະເມີນຄວາມສຳເລັດ, ປະສົບການ ແລະການຄາດເຄື່ອນຕ່າງໆໃນການປະຕິບັດນະໂຍບາຍເສດຖະກິດໃນປີທີ່ຜ່ານມາ ແລະ ວາງທິດທາງດ້ານເສດຖະກິດຢ່າງລະອຽດໃນປີນີ້; ສະພາປະຊາຊົນສູງສຸດ ໄດ້ຮັບຮອງເອົາບົດລາຍງານກ່ຽວກັບວຽກງານຂອງຄະນະລັດຖະມົນຕີ.

ໃນລະຫວ່າງວາລະກອງປະຊຸມ, ນາຍົກລັດຖະມົນຕີຄົນໃໝ່ໄດ້ສາບານຕົນໃນນາມຂອງສະມາຊິກຄະນະລັດຖະມົນຕີ ໂດຍໃຫ້ຄຳໝັ້ນສັນຍາວ່າຈະຮັກສາຄວາມຈົງຮັກພັກດີຕໍ່ລັດຖະທຳມະນູນຂອງ ສປປ ເກົາຫຼີແລະດຳເນີນຊີວິດຕາມຄວາມຄາດຫວັງຂອງພັກແຮງງານເກົາຫຼີ ແລະ ປະຊາຊົນ ດ້ວຍຄວາມອຸທິດຕົນຢ່າງແທ້ຈິງ.

ທ່ານ ປັກ ເນັ້ນໜັກວ່າ ຄະນະລັດຖະມົນຕີຈະ"ຍຶດໝັ້ນໃນແນວທາງ ແລະ ນະໂຍບາຍຂອງພັກເປັນເສັ້ນຊີວິດ" ແລະ ປະຕິບັດວຽກງານດ້ານເສດຖະກິດ "ດ້ວຍຄວາມຮັບຜິດຊອບ ແລະຂະຫຍັນຂັນແຂງ" ເພື່ອບັນລຸເປົ້າໝາຍການເຕີບໂຕ ແລະ ການພັດທະນາເສດຖະກິດ ໂດຍລວມຂອງປະເທດ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນ.

# ຄະນະລັດຖະມົນຕີກຳປູເຈຍ ອະນຸມັດຮ່າງກົດໝາຍ ເພີ່ມໂທດຜູ້ປະຕິເສດຄວາມໂຫດຮ້າຍຂອງຂະເໝນແດງ



(AP) - ວັນສຸກທີ 24 ມັງກອນຜ່ານມາ, ຄະນະລັດຖະມົນຕີກຳປູເຈຍ ໄດ້ອະນຸມັດຮ່າງກົດໝາຍທີ່ຈະລົງໂທດຜູ້ທີ່ປະຕິເສດການກໍ່ຄວາມໂຫດຮ້າຍໃນທ້າຍຊຸມປີ 1970 ພາຍໃຕ້ການປົກຄອງຂອງຂະເໝນແດງ (Khmer Rouge) ເຊິ່ງນະໂຍບາຍທີ່ໂຫດຮ້າຍຂອງຂະເໝນແດງນັ້ນ ໄດ້ເຮັດໃຫ້ມີຜູ້ເສຍຊີວິດ 1.7 ລ້ານຄົນ ຈາກຄວາມອຶດຫິວ, ການປະຫານຊີວິດແລະການເຈັບປ່ວຍ.

ຫ້ອງວ່າການຄະນະລັດຖະບານກ່າວວ່າ, ຮ່າງກົດໝາຍດັ່ງກ່າວມີຈຸດປະສົງເພື່ອປ້ອງກັນບໍ່ໃຫ້ເຫດການເຊັ່ນນີ້ເກີດຂຶ້ນຊ້ຳອີກ ແລະ ໃຫ້ຄວາມຍຸຕິທຳແກ່ຜູ້ເຄາະຮ້າຍຈາກຂະເໝນແດງ.

ຮ່າງກົດໝາຍທີ່ມີ 7 ມາດຕາ ເຊິ່ງຕ້ອງໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ ກ່ອນທີ່ຈະປະກາດໃຊ້ເປັນກົດໝາຍໄດ້, ກຳນົດໃຫ້ຜູ້ລະເມີດຕ້ອງຮັບໂທດຕິດຄຸກແຕ່ 1-5 ປີ ແລະ ປັບໃໝ 2,500 ຫາ 125,000 ໂດລາສະຫະລັດ; ມີຄວາມເປັນໄປໄດ້ສູງທີ່ຮ່າງກົດໝາຍສະບັບນີ້ຈະຜ່ານການຮັບຮອງຢ່າງແນ່ນອນ ເນື່ອງຈາກວ່າພັກປະຊາຊົນກຳປູເຈຍທີ່ເປັນພັກລັດຖະບານ ມີ 120 ຈາກທັງໝົດ 125 ທີ່ນັ່ງໃນສະພາແຫ່ງຊາດ.

ການເຄື່ອນໄຫວນີ້ມີຂຶ້ນສາມເດືອນກ່ອນວັນຄົບຮອບ 50 ປີ ການຍຶດຄອງກຳປູເຈຍຂອງຂະເໝນແດງ ເມື່ອວັນທີ 15 ເມສາ 1975.

ໃນປີ 2013, ກຳປູເຈຍໄດ້ອອກກົດໝາຍທີ່ຄ້າຍຄືກັນນີ້ເພື່ອຕ້ານການປະຕິເສດຄວາມໂຫດຮ້າຍຂອງຂະເໝນແດງ, ກົດໝາຍດັ່ງກ່າວມີໂທດຕິດຄຸກແຕ່ 6 ເດືອນ ຫາ 2 ປີ ແລະ ປັບໃໝ 250-1,000 ໂດລາ; ເມື່ອເດືອນພຶດສະພາ 2024 ທີ່ຜ່ານມາ, ທ່ານຮຸນແຊນ ປະທານສະພາສູງ ໄດ້ສະເໜີວ່າກົດໝາຍປີ2013 ຈຳເປັນຕ້ອງໄດ້ຮັບການປັບປຸງ.

ສານທີ່ໄດ້ຮັບການສະໜັບສະໜູນຈາກອົງການສະຫະປະຊາຊາດ ທີ່ເປີດການພິຈາລະນາຄະດີໃນປີ 2009 ພົບວ່າ ລັດຖະບານຂະເໝນແດງ ໄດ້ກະທຳການສັງຫານໝູ່, ກໍ່ອາຊະຍາກຳຕໍ່ມະນຸດຊາດ ແລະ ລະເມີດສົນທິສັນຍາເຈນີວາ ປີ 1949 ຢ່າງຮ້າຍແຮງ; ນອກຈາກນີ້, ຍັງລະເມີດກົດໝາຍອາຍາຂອງກຳປູເຈຍ, ກົດໝາຍມະນຸດສະທຳສາກົນ ແລະ ສົນທິສັນຍາສາກົນຕ່າງໆທີ່ກຳປູເຈຍຍອມຮັບ.

# ປະທານາທິບໍດີຊີຣີ ປະກາດແຜນງານ ດ້ານນິຕິບັນຍັດ ແລະ ການເມືອງ



(Xinhua) - ທ່ານ ອາເໝັດ ອັລ-ຊາຣາ (Ahmed al-Sharaa) ປະທານາທິບໍດີຮັກສາການຄົນໃໝ່ຂອງຊີຣີ ໄດ້ຖະແຫຼງການຕໍ່ສາທາລະນະຄັ້ງທຳອິດເມື່ອວັນພະຫັດທີ 30 ມັງກອນຜ່ານມາ ໂດຍໃຫ້ຄຳໝັ້ນສັນຍາຈະຈັດຕັ້ງຂອບວຽກງານນິຕິບັນຍັດ ແລະ ການເຈລະຈາລະດັບຊາດ ກ່ຽວກັບອະນາຄົດທາງການເມືອງຂອງຊີຣີ.

ໜຶ່ງວັນຫຼັງຈາກໄດ້ຮັບການແຕ່ງຕັ້ງ, ທ່ານ ອັລ-ຊາຣາ ໄດ້ປະກາດສ້າງຕັ້ງຄະນະກຳມະການກະກຽມ ເຊິ່ງມີໜ້າທີ່ເລືອກສະພານິຕິບັນຍັດຊົ່ວຄາວ ຫຼັງຈາກການຍຸບລັດຖະສະພາຊຸດກ່ອນ ໂດຍທ່ານກ່າວວ່າ "ຂ້າພະເຈົ້າຈະສ້າງຕັ້ງຄະນະກຳມະການກະກຽມເພື່ອເລືອກສະພານິຕິບັນຍັດຂະໜາດນ້ອຍ ເພື່ອຕື່ມເຕັມຊ່ອງວ່າງທາງສະຖາບັນໃນໄລຍະການປ່ຽນຜ່ານນີ້".

ຜູ້ນຳຮັກສາການ ໄດ້ເປີດເຜີຍແຜນການຂອງກອງປະຊຸມສົນທະນາລະດັບຊາດ ເຊິ່ງທ່ານອະທິບາຍວ່າເປັນ "ເວທີປາໄສເປີດກວ້າງສຳລັບການເຈລະຈາ ແລະປຶກສາຫາລື" ລະຫວ່າງທຸກຂະແໜງການຂອງສັງຄົມຊີຣີ ເພື່ອປຶກສາຫາລືກ່ຽວກັບໂຄງການການເມືອງຂອງປະເທດ. ນອກຈາກນີ້, ທ່ານຍັງໃຫ້ຄຳໝັ້ນສັນຍາວ່າຈະອອກຖະແຫຼງການລັດຖະທຳມະນູນເມື່ອບັນດາບາດກ້າວເບື້ອງຕົ້ນເຫຼົ່ານີ້ສຳເລັດ; "ຫຼັງຈາກມາດຕະການເຫຼົ່ານີ້, ພວກເຮົາຈະສະເໜີຖະແຫຼງການລັດຖະທຳມະນູນທີ່ຈະໃຊ້ເປັນເອກະສານອ້າງອີງທາງກົດໝາຍສຳລັບໄລຍະການປ່ຽນຜ່ານ" ທ່ານກ່າວເສີມ.

ການກ່າວປາໄສຂອງທ່ານ ອັລ-ຊາຣາ ໄດ້ສະແດງໃຫ້ເຫັນຂໍ້ລິເລີ່ມທາງການເມືອງທີ່ສຳຄັນຄັ້ງທຳອິດຂອງລັດຖະບານຂອງຕົນນັບແຕ່ເຂົ້າຮັບຕຳແໜ່ງ, ໂດຍສົ່ງສັນຍານຂອງການເຄື່ອນໄຫວທີ່ຈະກ້າວໄປສູ່ການສ້າງຕັ້ງສະຖາບັນໃຫ້ກັບຂະບວນການປ່ຽນຜ່ານ ຫຼັງຈາກລັດຖະບານຊຸດກ່ອນຫຼົ້ມສະຫຼາຍໃນເດືອນທັນວາປີຜ່ານມາ.

# Chad ຈັດກອງປະຊຸມສະພາແຫ່ງຊາດ ຊຸດໃໝ່ ຄັ້ງທຳອິດໃນຮອບ 10 ປີ



(Xinhua)-ວັນອັງຄານທີ 4 ກຸມພານີ້, ສາທາລະນະລັດຊາດ ໄດ້ຈັດກອງປະຊຸມສະພາແຫ່ງຊາດ (ສະພາຕ່ຳ) ຊຸດໃໝ່ ເປັນເທື່ອທຳອິດໃນຮອບຫຼາຍກວ່າສິບປີ; ພາຍໃຕ້ມາດຕະການຮັກສາຄວາມປອດໄພຢ່າງເຄັ່ງຄັດ, ສະມາຊິກສະພາແຫ່ງຊາດ (ສສຊ) 188 ທ່ານ ໄດ້ເຂົ້າພິທີສາບານຕົນໃນກອງປະຊຸມຄັ້ງນີ້ ເຊິ່ງໃນລະຫວ່າງນັ້ນ, ຈະມີການເລືອກປະທານແລະບັນດາຮອງປະທານສະພາແຫ່ງຊາດ.

ສະພາແຫ່ງຊາດຊຸດໃໝ່ ໄດ້ຮັບການເລືອກຕັ້ງໃນເດືອນທັນວາ 2024 ໂດຍພັກລັດຖະບານຂະບວນການກອບກູ້ຊາດ (Patriotic Salvation Movement - MPS) ໄດ້ 124 ຈາກທັງໝົດ 188 ທີ່ນັ່ງ, ອີງຕາມຜົນການປະກາດຢ່າງເປັນທາງການຂອງສະພາລັດຖະທຳມະນູນຂອງປະເທດ.

ທ່ານ ອາລີ ໂຄໂມຕູ ໄຊມີ (Ali Kolotou Tchaimi) ອາຍຸ 53 ປີ, ສະມາຊິກອາວຸໂສ

ອ່ານຕໍ່ໜ້າ 11

## ເຝົ້າເບິ່ງ ໄດ້ຍິນ

❖ ວິເສດ ສະແຫວງສຶກສາ

# ກັນໄວ້ລ່ວງໜ້າ ດີກວ່າ ມາແກ້ຕາມຫຼັງ





ພາຍໃຕ້ຫົວຂໍ້ບົດປະຈຳສະບັບນີ້ ຜູ້ຂຽນໄດ້ຄັດຈ້ອນເອົາເລື່ອງເກົ່າໆທີ່ເວົ້າເຖິງມາດຕະການປ້ອງກັນພະຍາດສໍ້ລາດບັງຫຼວງ ກໍຄືບັນຫາສໍ້ໂກງຊັບສິນຂອງລັດ-ຂອງປະຊາຊົນ ໂດຍພະນັກງານຂອງລັດ. ເລື່ອງທຳອິດນີ້ ຄັດມາຈາກໜັງສືພິມວຽງຈັນທາມ ສະບັບປະຈຳວັນທີ 30 ສິງຫາ 2013 ຄືປະມານເກືອບ 12 ປີຜ່ານມາ, ຫົວຂໍ້ຂ່າວແປເປັນພາສາລາວໄດ້ຄວາມວ່າ **"ພະນັກງານພາສີ ສ.ເກົາຫຼີ ຖືກຫ້າມຮ່ວມຮັບປະທານອາຫານ ແລະຫຼິ້ນກິລາຕີກ໊ອບ ກັບບັນດາຜູ້ຈັດການບໍລິສັດໃຫຍ່ໆ"** ລາຍລະອຽດຂອງຂ່າວມີຢູ່ວ່າ ໃນທ້າຍເດືອນສິງຫາ 2013 ໄດ້ມີກອງປະຊຸມບັນດາພະນັກງານພາສີຂັ້ນສູງ ຄືແຕ່ລະດັບຫົວໜ້າກົມ ແລະ ທຽບເທົ່າຂຶ້ນໄປ ທີ່ປະຈຳຢູ່ສູນກາງ ແລະ ທ້ອງຖິ່ນ ຈຳນວນ 260 ຄົນ ພາຍໃຕ້ການເປັນປະທານຂອງທ່ານ ກິມ ດຸກ ຈຸງ ອຳນວຍການໃຫຍ່ສຳນັກງານພາສີແຫ່ງຊາດໃນເວລານັ້ນ; ເນື້ອໃນສຳຄັນຂອງກອງປະຊຸມ ກໍຄືຮ່ວມກັນພິຈາລະນາ ແລະ ຮັບຮອງເອົາມາດຕະການສະກັດກັ້ນບັນຫາສໍ້ລາດບັງຫຼວງທີ່ເກີດຂຶ້ນໃນກຸ່ມພະນັກງານພາສີຂັ້ນສູງໃນທົ່ວປະເທດ. ທ່ານ ກິມ ດຸກ ຈຸງ ມີປະໂຫຍກຄຳເວົ້າເດັດໆຕໍ່ກອງປະຊຸມໃນຄັ້ງນັ້ນວ່າ "ນະໂຍບາຍພາສີສະອາດນັ້ນ ຈະປາກົດເປັນຈິງໄດ້ ກໍຕໍ່ເມື່ອພະນັກງານພາສີຂັ້ນສູງເປັນຕົວຢ່າງອອກໜ້າພາທາງ" ໜຶ່ງໃນຫຼາຍໆບັນຫາໃນກອງປະຊຸມຄັ້ງນີ້ ກໍຄືການຮັບຮອງເອົາມາດຕະການຫ້າມພະນັກງານພາສີຂັ້ນສູງພົບປະເປັນການສ່ວນຕົວກັບບັນດາຜູ້ຈັດການບໍລິສັດໃຫຍ່ໆ ຈຳນວນ 100 ຫົວໜ່ວຍຢູ່ພາຍໃນປະເທດ ໂດຍສະເພາະແມ່ນຫ້າມຮ່ວມຮັບປະທານອາຫານ ແລະ ຫຼິ້ນກິລາຕີກ໊ອບ; ພະນັກງານພາສີທີ່ນອນຢູ່ໃນຂໍ້ຫ້າມ ແມ່ນນັບແຕ່ຫົວໜ້າກົມຢູ່ຂັ້ນສູນກາງ ແລະ ຫົວໜ້າຫ້ອງການພາສີໃນລະດັບແຂວງ.

ຂ່າວບອກວ່າ ມາດຕະການຫ້າມດັ່ງກ່າວນັ້ນ ມີຂຶ້ນທ່າມກາງຫາງສຽງວິພາກວິຈານຈາກທົ່ວສັງຄົມ ສ.ເກົາຫຼີ ກ່ຽວກັບບັນຫາຫຼີບຫຼີກພາສີຂອງບັນດາຫົວໜ່ວຍທຸລະກິດຊັ້ນນຳ ເຊື່ອວ່າເກີດມາຈາກການພົວພັນທີ່ສະໜິດສະໜົມລະຫວ່າງພະນັກງານພາສີຂັ້ນສູງ ກັບເຫຼົ່າຜູ້ນຳຂອງບໍລິສັດຕ່າງໆ ທີ່ມີຜົນປະໂຫຍດມືດນຳກັນ; ໃນຕົ້ນເດືອນສິງຫາ 2013 ພະນັກງານຂັ້ນສູງປະຈຳສຳນັກງານພາສີແຫ່ງຊາດ ສ.ເກົາ ຫຼີ ຖືກສອບສວນ ແລະ ລົງວິໄນ ໃນຄະດີສໍ້ໂກງໃນປີ 2006, ທ່ານ ຈອນ ກູນ ປົວ (Jeon Goon pyo) ອຳນວຍການໃຫຍ່ສຳນັກງານພາສີແຫ່ງຊາດໃນເວລານັ້ນ ໄດ້ຕິດແຮ້ວຄະດີຮັບສິນບົນຈາກກຸ່ມບໍລິສັດCJເປັນຈຳນວນເງິນ 340 ລ້ານວອນ (ສະ ກຸນເງິນ ສ.ເກົາຫຼີ ເຊິ່ງມີມູນຄ່າເທົ່າກັບ 300,000 ໂດລາສະຫະລັດ).

ຈາກເລື່ອງລາວໃນຂ່າວນີ້ ພວກເຮົາຄົງເຫັນນຳກັນວ່າ ມາດຕະການຕ້ານການສໍ້ລາດບັງຫຼວງນັ້ນຕ້ອງມີຈຸດສຸມ ແລະ ເປົ້າໝາຍຢ່າງຄັກແນ່ ຄືສຸມໃສ່ພະນັກງານທີ່ "ຢູ່ໃກ້ເງິນ" ພະນັກງານທີ່ມີສິດມີອຳນາດສູງໃນການເກັບພາສີ, ໃນການອະນຸຍາດໃຫ້ສຳປະທານ ຫຼື ມີລາຍເຊັນສັກສິດນັ້ນແຫຼະ ຕ້ອງຈັດການກັບພວກນີ້ກ່ອນໃຫ້ໄດ້ຢ່າງເດັດຂາດ ແລ້ວຈຶ່ງລາມໄປສູ່ກຸ່ມອື່ນໆ.




# ເຂົ້າໃຈຜິດ

*# ບ່າວກະບື*

**ບາງ**ເມຍທີ່ຍັງໃໝ່ຢູ່ ເວົ້າກັບຜົວເມື່ອເຂົາກັບຈາກວຽກວ່າ "ນ້ອງມີຂ່າວດີທີ່ສຸດສຳລັບອ້າຍ, ຄືໃນອີກບໍ່ດົນນີ້ ພວກເຮົາຈະເພີ່ມຈຳນວນຂຶ້ນເປັນສາມຄົນແທນທີ່ຈະເປັນສອງ".ຝ່າຍຜົວແລ່ນໄປກອດບາງເມຍດ້ວຍຮອຍຍິ້ມເຕັມໃບໜ້າ ແລະ ຄວາມເບີກບານຈັບຢູ່ໃນແກ່ນຕາ. ເຂົາຈູບບາງ ແລ້ວບາງເວົ້າອອກມາວ່າ: "ນ້ອງດີໃຈ ທີ່ອ້າຍມີຄວາມຮູ້ສຶກຄືແນວນີ້ ເພາະວ່າມື້ອື່ນເຊົ້າ ແມ່ຂອງນ້ອງຊິຍ້າຍມາຢູ່ນຳພວກເຮົາ."

# Misunderstanding

*# BAOKBU*

Teh newlywed wife said to her husband when he returned from work, "I have the best news for you. Pretty soon, we're going to be three in this house instead of two." Her husbabd ran to hug her with a smile on his face and delight in his eyes. He was kissing her and she said, "I'm glad that you feel this way since tomorrow morning, my mother mobes in with us."

## ຕາມພາສາ ກາຕູນ




ໝາແລກຜ້າຫົ່ມ ບັນຫາທີ່ສັງຄົມເບິ່ງຂ້າມ

● ໂດຍ : ພູຜາ

## Chad ...

(ຕໍ່ຈາກໜ້າ 10)

ຂອງ MPS ເຊິ່ງເປັນຜູ້ສະໝັກພຽງຄົນດຽວ ໄດ້ຮັບເລືອກຕັ້ງເປັນປະທານສະພາແຫ່ງຊາດ ຢ່າງເປັນເອກະສັນ.

ທ່ານດຳລົງຕຳແໜ່ງລະດັບສູງຫຼາຍຕຳແໜ່ງທັງຕຳແໜ່ງຜູ້ບໍລິຫານໃນກອງທັບແລະຝ່າຍພົນລະເຮືອນ ລວມທັງຮອງປະທານຜູ້ທີໜຶ່ງຂອງສະພາໄລຍະຂ້າມຜ່ານແຫ່ງຊາດຂອງປະເທດ ແລະ ຮອງປະທານລັດຖະສະພາແຫ່ງປະຊາຄົມເສດຖະກິດແລະການເງິນຂອງລັດອາຟຣິກາກາງ.

ການເລືອກຕັ້ງສະພາແຫ່ງຊາດຄັ້ງຫຼ້າສຸດໃນປະເທດອາຟຣິກາກາງແຫ່ງນີ້ ໄດ້ຈັດຂຶ້ນເມື່ອປີ 2011 ເຊິ່ງ ສສຊ ມີກຳນົດສິ້ນສຸດວາລະໃນປີ 2015 ແຕ່ທາງການໄດ້ເລື່ອນການເລືອກຕັ້ງຫຼາຍຄັ້ງ ໂດຍອ້າງເຖິງການຂາດງົບປະມານໃນການຈັດການເລືອກຕັ້ງ ແລະການແຜ່ລະບາດຂອງພະຍາດໂຄວິດ-19.

ໃນປີ2021, ມະຫາມັດ ອິດຣິສເດບີອິດໂນ(Mahamat Idriss Deby Itno) ໄດ້ຂຶ້ນກຳອຳນາດຫຼັງຈາກບິດາຂອງເຂົາ ທ່ານ ອິດຣິສ ເດບີ ອິດໂນ ເສຍຊີວິດຍ້ອນບາດແຜທີ່ໄດ້ຮັບໃນແນວໜ້າທາງພາກເໜືອຂອງປະເທດ; ທ່ານ ມະຫາມັດ ເດບີ ໄດ້ນຳພາລັດຖະບານໄລຍະຂ້າມຜ່ານເປັນເວລາ3ປີກ່ອນຈະຈັດການເລືອກຕັ້ງສະພານິຕິບັນຍັດ, ລະດັບພູມີພາກ ແລະ ລະດັບເທດສະບານ ເມື່ອວັນທີ 29 ທັນວາ 2024.

## ພົບປະແລກປ່ຽນ ...

(ຕໍ່ຈາກໜ້າ 5)

ກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ.

ຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ,ປະກອບຄຳເຫັນຕໍ່ບັນດາຫົວຂໍ້ທີ່ໄດ້ຕັ້ງຂຶ້ນ ເພື່ອແລກປ່ຽນເປັນຕົ້ນແມ່ນບົດຮຽນໃນການເຂົ້າຮ່ວມແຕ່ຫົວທີ ໃນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາແຜນງົບປະມານແຫ່ງລັດຂອງແຂວງ (ພາກປົກກະຕິ, ບ້ວງເງິນກອງທຶນທາງ ແລະ ເງິນເກີນແຜນ); ບົດຮຽນໃນການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ນະຄອນ; ບົດຮຽນໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ຄຳສະເໜີ ແລະ ບັນຫາສາຍດ່ວນ ທີ່ສະເໜີຜ່ານສະພາປະຊາຊົນແຂວງ.

ການພົບປະກັນຄັ້ງນີ້, ຍັງໄດ້ສ້າງຂະບວນການກິດຈະກຳກິລາມິດຕະພາບ ເພື່ອເສີມສ້າງຄວາມສະມັກຄີຮັກແພງລະຫວ່າງຄະນະນຳ ກັບພະນັກງານໃຫ້ມີຄວາມສະໜິດສະໜົມແລະເຂົ້າໃຈກັນດີຍິ່ງຂຶ້ນ ໄປຄຽງຄູ່ກັບການສົ່ງເສີມສຸຂະພາບແລະຮ່າງກາຍໃຫ້ແຂງແຮງ ເພື່ອຮັບປະກັນຄວາມພ້ອມໃຫ້ແກ່ພະນັກງານທັງໝົດ ສາມາດຈັດຕັ້ງປະຕິບັດໜ້າທີ່ວຽກງານໃຫ້ມີຜົນສຳເລັດຕາມຄາດໝາຍ.

**(ວິນັດ ສີສຸລາດ)**











## ສົມເດັດ...

(ຕໍ່ຈາກໜ້າ 1)

ກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ໂດຍມີທ່ານ ຣສ. ປອ. ທອງສະລິດ ມັງໜໍ່ເມກ ເລຂາທິການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ, ທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນກ່ຽວຂ້ອງໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ສົມກຽດ ທີ່ສະໜາມບິນສາກົນວັດໄຕ, ນະຄອນຫຼວງວຽງຈັນ.

ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ໄດ້ວາງພວງມະລາຢູ່ທີ່ອະນຸສາວະລີນັກຮົບນິລະນາມ ເຊິ່ງຕິດຕາມໂດຍທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດລາວ ແລະເຈົ້າຄອງນະຄອນຫຼວງວຽງຈັນພ້ອມດ້ວຍຄະນະ. ຈາກນັ້ນ, ກໍໄດ້ເຂົ້າຮ່ວມພິທີຕ້ອນຮັບຢ່າງເປັນທາງການໂດຍພະນະທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດລາວພ້ອມດ້ວຍຄະນະທາງການທັງສອງຝ່າຍ ຢູ່ທີ່ຫໍສະພາແຫ່ງຊາດ.

ການຢ້ຽມຢາມ ສປປ ລາວ ຂອງສົມເດັດອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ໃນຄັ້ງນີ້, ເປັນການນຳເອົາໄມຕີຈິດມິດຕະພາບ ແລະ ຄວາມສາມັກຄີຮັກແພງຖານບ້ານໃກ້ເຮືອນຄຽງ, ບ້ານແກ່ວເມືອງດອງທີ່ດີງາມ ມາສູ່ປະຊາຊົນລາວ, ທັງເປັນການປະກອບສ່ວນອັນສຳຄັນເຂົ້າໃນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ລາວ-ກຳປູເຈຍ ໃຫ້ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ.

ພາຍຫຼັງພິທີຮັບຢ່າງເປັນທາງການ, ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ພ້ອມດ້ວຍຄະນະ ແລະ ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ພ້ອມດ້ວຍຄະນະ ໄດ້ດຳເນີນການພົບປະເປັນທາງການທີ່ຫໍສະພາແຫ່ງຊາດ ເພື່ອພ້ອມກັນທົບທວນຄືນການພົວພັນຮ່ວມມືສອງຝ່າຍ ພ້ອມທັງກຳນົດທິດທາງການຮ່ວມມືໃນຕໍ່ໜ້າແລະແລກປ່ຽນບັນດາບາງທັດສະນະ ທັງພາກພື້ນ ແລະ ສາກົນ.

ໃນການພົບປະຄັ້ງນີ້, ປະທານສະພາແຫ່ງຊາດລາວ ໄດ້ຕີລາຄາສູງຕໍ່ການຢ້ຽມຢາມ ສປປ ລາວ ຢ່າງເປັນທາງການເປັນຄັ້ງທຳອິດ ຂອງສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ໃນນາມທີ່ເປັນປະທານສະພາສູງແຫ່ງຣາຊະອານາຈັກກຳປູເຈຍ, ສະແດງຄວາມຍ້ອງຍໍຊົມເຊີຍ ແລະຕີລາຄາສູງຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງໃນຫຼາຍດ້ານທີ່ປະຊາຊົນກຳປູເຈຍຍາດມາໄດ້ໃນໄລຍະຜ່ານມາ ອັນໄດ້ເຮັດໃຫ້ຣາຊະອານາຈັກກຳປູເຈຍ ມີສະຖຽນລະພາບດ້ານການເມືອງ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປົວແປງດີຂຶ້ນເປັນກ້າວໆ, ບົດບາດອິດທິພົນຂອງກຳປູເຈຍ ນັບມື້ນັບໄດ້ຮັບການຍົກສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ສະແດງຄວາມພາກພູມໃຈທີ່ໄດ້ມາຢ້ຽມຢາມ ສປປລາວ ຢ່າງເປັນທາງການຄັ້ງທຳອິດ ພາຍຫຼັງໄດ້ຮັບການເລືອກຕັ້ງເປັນປະທານສະພາສູງ ແຫ່ງ ຣາຊະອະອານາຈັກກຳປູເຈຍ ໃນປີ 2024, ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືລະຫວ່າງສອງອົງການນິຕິບັນຍັດ ກຳປູເຈຍ-ລາວ ທີ່ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ເຊິ່ງສະແດງອອກໃນການແລກປ່ຽນຄະນະຜູ້ແທນຂັ້ນສູງສຸດ ແລະ ຂັ້ນຕ່າງໆນຳກັນຢ່າງເປັນປົກກະຕິ; ບັນດາຂະແໜງການຕ່າງໆຂອງສອງປະເທດ ກໍມີການພົວພັນຮ່ວມມືແລະການຊ່ວຍເຫຼືອເຊິ່ງກັນແລະກັນ ໂດຍລົງນາມສັນຍາ, ບົດບັນທຶກ ແລະ ນິຕິກຳຕ່າງໆຮ່ວມກັນ ທາງດ້ານການເມືອງ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ, ການຄ້າ-ການລົງທຶນ, ພະລັງງານ, ການສຶກສາ-ກິລາ, ການທ່ອງທ່ຽວ ແລະ ອື່ນໆ.

ສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືທີ່ດີງາມ, ສະໜິດສະໜົມ ລະຫວ່າງສອງປະເທດ ກໍຄືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ໂດຍໄດ້ພ້ອມກັນຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂອງບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມື ທີ່ສອງອົງການນິຕິບັນຍັດ ລາວ-ກຳປູເຈຍ ໄດ້ລົງນາມຮ່ວມກັນເປັນຕົ້ນແມ່ນການແລກ ປ່ຽນຢ້ຽມຢາມຂອງການນຳຂັ້ນຕ່າງໆທີ່ຕິດພັນກັບການແລກປ່ຽນບົດຮຽນປະສົບການທີ່ດີໃນການປະຕິບັດພາລະບົດບາດດ້ານນິຕິບັນຍັດ; ສອງຝ່າຍໄດ້ສົ່ງສານອວຍພອນ, ສານຊົມເຊີຍແລະສານຂອບໃຈເຊິ່ງກັນແລະກັນ ເນື່ອງໃນໂອ ກາດສຳຄັນຕ່າງໆຢ່າງເປັນປົກກະຕິ; ພ້ອມທັງໄດ້ໃຫ້ການສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນແລະສາກົນເປັນຕົ້ນແມ່ນເວທີກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA), ສະຫະພັນລັດຖະສະພາສາກົນ(IPU), ສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ (APF) ແລະ ອື່ນໆ. ສອງຝ່າຍໄດ້ເປັນເອກະພາບໃນການສືບຕໍ່ເສີມຂະຫຍາຍການຮ່ວມມືທີ່ມີມູນເຊື້ອອັນດີງາມມາເປັນເວລາດົນນານເຊິ່ງປະຊາຊົນສອງຊາດໄດ້ຮ່ວມມືຕໍ່ສູ້ເພື່ອເອກະລາດແຫ່ງຊາດໃນເມື່ອກ່ອນ ແລະ ເຫັນດີເປັນເອກະພາບຈະສືບຕໍ່ຊຸກຍູ້ການຮ່ວມມືລະຫວ່າງສອງພັກ, ສອງລັດແລະສອງອົງການນິຕິບັນຍັດ ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ.

ໃນການຢ້ຽມຢາມສປປ ລາວ ໃນຄັ້ງນີ້, ຕອນບ່າຍຂອງວັນດຽວກັນສົມເດັດອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ປະທານສະພາສູງ ແຫ່ງ ຣາຊະອານາຈັກກຳປູເຈຍ ຍັງໄດ້ເຂົ້າຢ້ຽມຄຳນັບພະນະທ່ານສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປລາວ ຢູ່ທີ່ສຳນັກງານນາຍົກລັດຖະມົນຕີ; ໃນການພົບ, ສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດ ທີ່ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນທັງປະເທດລາວ-ກຳປູເຈຍ. ພ້ອມນັ້ນ, ສອງຝ່າຍຍັງໄດ້ແລກປ່ຽນການຢ້ຽມຢາມເຊິ່ງກັນແລະກັນຢ່າງເປັນປົກກະຕິ ເປັນຕົ້ນແມ່ນການຢ້ຽມຢາມ ແລະ ຜົນການພົບປະລະຫວ່າງນາຍົກລັດຖະມົນຕີ ແຫ່ງ ສປປລາວ ແລະ ນາຍົກລັດຖະ ມົນຕີ ແຫ່ງ ຣາຊະອານາຈັກກຳປູເຈຍ ໃນຄັ້ງວັນທີ 4 ທັນວາ 2024 ຜ່ານມາ, ເຊິ່ງສອງຝ່າຍໄດ້ຕົກລົງເປັນເອກະພາບກັນໃນຫຼາຍບັນຫາທີ່ສຳຄັນເປັນຕົ້ນແມ່ນພະລັງງານໄຟຟ້າຄວາມຮ້ອນຖ່ານຫີນ, ໂຄງການກໍ່ສ້າງເສັ້ນທາງເຊື່ອມຕໍ່ລະຫວ່າງສອງປະເທດ, ການຊຸກຍູ້ການຄ້າ-ການລົງທຶນ, ການເຂົ້າ-ອອກຜ່ານແດນ, ການແກ້ໄຂບັນຫາຊາຍແດນລະຫວ່າງສອງປະເທດແລະອື່ນໆເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ ແລະ ກຳປູເຈຍ.

ໃນການຢ້ຽມສປປລາວ ຢ່າງເປັນທາງການຄັ້ງນີ້, ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ຍັງໄດ້ຮ່ວມກັບພະນະທ່ານ ປອ. ໄຊສົມພອນ ພົມວິຫານປູກຕົ້ນໄມ້ຢູ່ທີ່ຂ້າງອາຄານຫໍສະພາແຫ່ງຊາດລາວ, ເຂົ້າຮ່ວມພິທີບາສີສູ່ຂວັນ ແລະ ງານລ້ຽງຕ້ອນຮັບ ຈັດໂດຍພະນະທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ຢູ່ໂຮງແຮມ ຣໍລິເດອິນ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ